# ເຂື່ອນ, ແມ່ນ້ຳ ແລະ ສິດທິຂອງຊຸມຊົນ

## ຄູ່ມືແນະນຳຊຸມຊົນໃນລາວ ທີ່ໄດ້ຮັບຜົນກະທົບຈາກເຂື່ອນ



INTERNATIONAL RIVERS
people • water • life

# ເຂື່ອນ, ແມ່ນໍ້າ ແລະ ສິດທິຂອງຊຸມຊົນ

ຄູ່ມືແນະນຳຊຸມຊົນໃນລາວ
ທີ່ໄດ້ຮັບຜົນກະທົບຈາກເຂື່ອນ

INTERNATIONAL RIVERS
people • water • life
ອົງການແມ່ນໍ້າສາກົນ

<u>ຈັດພິມໂດຍ</u>

ອົງການແມ່ນ້ຳສາກົນ

2150 Allston Way, Suite 300,

Berkeley CA 94804, USA

Tel: + 1 510 848 1155,

info@internationalrivers.org, www.internationalrivers.org


ອົງການແມ່ນ້ຳສາກົນເປັນອົງການຈັດຕັ້ງທີ່ບໍ່ແມ່ນຂອງລັດຖະບານ
ເຮັດໜ້າທີ່ໃຫ້ການສະໜັບສະໜູນຊຸມຊົນ
ທີ່ໄດ້ຮັບຜົນກະທົບຈາກເຂື່ອນໂດຍມີຫ້ອງການໃຫຍ່ຕັ້ງຢູ່ປະເທດສະຫະລັດອາເມລິກາ
ແລະ ມີຫ້ອງການສາຂາຕັ້ງຢູ່ບາງກອກ, ປະເທດໄທ.


ພາບສ່ວນໃຫຍ່ແມ່ນປະກອບໂດຍທ່ານ Haris Ichwan, 2011
ພາບຈຳນວນໜຶ່ງແມ່ນປະກອບໂດຍທ່ານ Hesperian (www.hesperian.org).

# ຄຳນຳ

ໃນປະຈຸບັນນີ້, ລັດຖະບານລາວໄດ້ສະໜັບສະໜູນ ແລະ ສົ່ງເສີມການກໍ່ສ້າງເຂື່ອນຫຼາຍແຫ່ງ. ຈຸດປະສົງຂອງການຈັດພິມປື້ມຄູ່ມືແນະນຳສະບັບນີ້ຂື້ນມາກໍ່ເພື່ອ:

- ແນະນຳໃຫ້ທ່ານທັງຫຼາຍຮູ້ວ່າຖ້າມີການກໍ່ສ້າງເຂື່ອນໃນເຂດພື້ນທີ່ຂອງທ່ານຈະມີບັນຫາຫຍັງເກີດຂື້ນ
- ຊ່ວຍໃຫ້ທ່ານເຂົ້າໃຈກົດໝາຍຂອງລາວກ່ຽວກັບການວາງແຜນ ແລະ ການປະຕິບັດງານກ່ຽວກັບເຂື່ອນ ແລະ ການຊົດເຊີຍໃຫ້ແກ່ປະຊາຊົນຜູ້ທີ່ໄດ້ຮັບຄວາມເສຍຫາຍຍ້ອນເຂື່ອນ
- ໃຫ້ຂໍ້ຄິດເຫັນແກ່ທ່ານ ເພື່ອປົກປ້ອງຕົນເອງ ແລະ ຊຸມຊົນຂອງທ່ານຈາກຄວາມເສຍຫາຍທີ່ອາດຈະເກີດຂື້ນຈາກເຂື່ອນນັ້ນ ທ່ານສາມາດເຮັດຫຍັງໄດ້ແດ່

ໃນຕອນຕົ້ນຂອງປື້ມຄູ່ມືແນະນຳສະບັບນີ້, ພວກເຮົາໄດ້ຈັດລຽງຄຳສັບສຳຄັນຈຳນວນໜຶ່ງພ້ອມດ້ວຍຄຳອະທິບາຍຄວາມໝາຍຂອງຄຳສັບເຫຼົ່ານັ້ນໄວ້ເພື່ອຊ່ວຍໃຫ້ທ່ານເຂົ້າໃຈເນື້ອເລື່ອງທີ່ນຳມາສະເໜີໃນປື້ມຄູ່ມືແນະນຳເຫຼັ້ມນີ້ໄດ້ງ່າຍຂື້ນ.

ພາກທີ 1 ສະເໜີໃຫ້ຮູ້ຂໍ້ມູນສຳຄັນກ່ຽວກັບເຂື່ອນ ຊຶ່ງໃນນັ້ນກໍ່ແມ່ນລວມເຖິງວິທີການປະຕິບັດງານຂອງເຂື່ອນ, ໃຜເປັນຜູ້ໄດ້ຮັບຜົນປະໂຫຍດຈາກເຂື່ອນ ແລະ ໄພອັນຕະລາຍທີ່ອາດຈະເກີດຂື້ນຈາກເຂື່ອນມີຄືແນວໃດ.

ພາກທີ 2 ໄດ້ຍົກໃຫ້ເຫັນຜົນກະທົບຂອງເຂື່ອນທີ່ມີຕໍ່ຊຸມຊົນ ແລະ ຊັບພະຍາກອນທຳມະຊາດມີຄືແນວໃດ.

ພາກທີ 3 ໄດ້ອະທິບາຍເນື້ອໃນກົດໝາຍຂອງລາວກ່ຽວກັບເຂື່ອນ ແລະ ພ້ອມທັງໃຫ້ຂໍ້ຄິດເຫັນວ່າຊຸມຊົນທີ່ໄດ້ຮັບຜົນກະທົບຈາກເຂື່ອນນັ້ນຈະສາມາດປົກປ້ອງສິດທິ ແລະ ຜົນປະໂຫຍດຂອງຕົນເອງໄດ້ຄືແນວໃດ. ໃນຕອນທ້າຍຂອງປື້ມຄູ່ມືແນະນຳເຫຼັ້ມນີ້ຍັງໄດ້ແນະນຳທ່ານໃຫ້ຮູ້ບ່ອນຕິດຕໍ່ພົວພັນເພື່ອຂໍການຊ່ວຍເຫຼືອໃນເວລາທ່ານ ແລະ ຊຸມຊົນຂອງທ່ານມີບັນຫາ.

ພວກເຮົາຄະນະຈັດພິມປື້ມຄູ່ມືເຫຼັ້ມນີ້ຂໍອວຍພອນໃຫ້ທ່ານຈົ່ງປະສົບຜົນສຳເລັດໃນຄວາມພະຍາຍາມປົກປ້ອງສິດທິ, ຜົນປະໂຫຍດ ແລະ ປົກປັກຮັກສາການດຳລົງຊີວິດ ແລະ ແມ່ນ້ຳລຳເຊຂອງທ່ານ!

## ຄຳສັບສຳຄັນທີ່ຄວນຮູ້

ຄຳສັບຈຳນວນໜຶ່ງທີ່ໄດ້ຈັດພິມເປັນຕົວເຂັ້ມໄວ້ໃນຄູ່ມືແນະນຳເຫຼັ້ມນີ້ອາດເປັນຄຳສັບໃໝ່ສຳລັບທ່ານຜູ້ອ່ານບາງຄົນ ຫຼື ບາງຄົນກໍ່ອາດຈະບໍ່ທັນຄຸ້ນເຄີຍກັບການນຳໃຊ້ມາກ່ອນ.

**ການຊົດເຊີຍ**: ໝາຍເຖິງການໃຊ້ແທນແກ່ຜົນເສຍຫາຍຂອງປະຊາຊົນດ້ວຍເງິນ ຫຼື ວັດຖຸສິ່ງຂອງ

**ການສຳຫຼວດຊຸມຊົນຢູ່ພື້ນທີ່ ຫຼື ການສຳຫຼວດ:** ແມ່ນວິທີການເກັບກຳຂໍ້ມູນຂອງຊຸມຊົນດ້ວຍການໂອ້ລົມກັບປະຊາຊົນເພື່ອສຶກສາໃຫ້ຮູ້ສະພາບເງື່ອນໄຂຂອງທ້ອງຖິ່ນ.

**ການຍົກຍ້າຍອອກ**: ໝາຍເຖິງການຍົກຍ້າຍປະຊາຊົນອອກຈາກບ້ານເຮືອນ ແລະ ດິນດອນຕອນຫຍ້າຂອງເຂົາເຈົ້າໄປຕັ້ງຖິ່ນຖານຢູ່ແຫ່ງໃໝ່.

**ເຂດລຸ່ມນ້ຳ**: ໝາຍເຖິງເຂດທີ່ຕັ້ງຢູ່ລຸ່ມ ຫຼື ກ້ອງເຂື່ອນລົງໄປ.

**ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ**: ໝາຍເຖິງການສຶກສາເພື່ອຊອກຮູ້ວ່າການສ້າງເຂື່ອນນີ້ຈະມີຜົນກະທົບບໍ່ດີຄືແນວໃດຕໍ່ປະຊາຊົນ, ສັດ, ທີ່ດິນ, ນ້ຳ ແລະ ອາກາດ.

**ພະລັງງານໄຟຟ້າ**: ໝາຍເຖິງການຜະລິດກະແສໄຟຟ້າດ້ວຍພະລັງງານນ້ຳຈາກເຂື່ອນ

**ອົງການຈັດຕັ້ງກວດກາເອກະລາດ**: ແມ່ນອົງການຈັດຕັ້ງເອກະລາດ ແລະ ເປັນກາງໃດໜຶ່ງທີ່ເຮັດໜ້າທີ່ກວດກາຜົນກະທົບຈາກເຂື່ອນ

**ອົງການຈັດຕັ້ງທີ່ບໍ່ແມ່ນຂອງລັດຖະບານ**: ແມ່ນອົງການຈັດຕັ້ງທີ່ເຄື່ອນໄຫວວຽກງານຢ່າງເປັນເອກະລາດໂດຍບໍ່ຂຶ້ນກັບລັດຖະບານ.

**ໂຮງໄຟຟ້າ**: ແມ່ນສ່ວນສຳຄັນຂອງໂຄງການສ້າງເຂື່ອນ ແມ່ນບ່ອນຕິດຕັ້ງກັງຫັນ ຫຼື ໃບພັດນ້ຳເພື່ອຜະລິດກະແສໄຟຟ້າ.

**ປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການ:** ໝາຍເຖິງປະຊາຊົນທຸກຄົນອາໄສຢູ່ເຂດລຸ່ມ ແລະ ເໜືອເຂື່ອນທີ່ໄດ້ຮັບຜົນກະທົບໂດຍກົງ ຫຼື ໂດຍທາງອ້ອມຈາກເຂື່ອນ.

**ເຈົ້າຂອງໂຄງການ, ຜູ້ພັດທະນາໂຄງການ:** ແມ່ນບັນດາບໍລິສັດທີ່ເປັນເຈົ້າຂອງໂຄງການສ້າງເຂື່ອນ.

**ການຟື້ນຟູ**: ໝາຍເຖິງການຊ່ວຍເຫຼືອປະຊາຊົນທີ່ໄດ້ຮັບຜົນກະທົບບໍ່ດີຈາກເຂື່ອນເພື່ອໃຫ້ເຂົາເຈົ້າສາມາດປັບປຸງຊີວິດການເປັນຢູ່ຂອງເຂົາເຈົ້າໃຫ້ຄືນສູ່ສະພາບປົກກະຕິຄືເກົ່າກ່ອນມີໂຄງການ.

**ອ່າງເກັບນ້ຳ**: ໝາຍເຖິງອ່າງນ້ຳທີ່ເກີດຂຶ້ນຫຼັງຈາກການກໍ່ສ້າງເຂື່ອນ.

**ການຍົກຍ້າຍຈັດສັນທີ່ຢູ່ອາໄສ**: ໝາຍເຖິງການຍົກຍ້າຍປະຊາຊົນອອກຈາກເຂດກໍ່ສ້າງເຂື່ອນເພື່ອໄປຕັ້ງຖິ່ນຖານຢູ່ບ້ານຕັ້ງໃໝ່ ຫຼື ບ້ານທີ່ມີຢູ່ກ່ອນແລ້ວ.

**ໄລຍະຂ້າມຜ່ານຂອງການຍົກຍ້າຍຈັດສັນທີ່ຢູ່ອາໄສໃໝ່:** ໝາຍເຖິງເວລາທີ່ປະຊາຊົນໃຊ້ໃນການປັບແປງ ແລະ ຟື້ນຟູລະດັບລາຍໄດ້ ແລະ ຊີວິດການເປັນຢູ່ຂອງເຂົາເຈົ້າຫຼັງຈາກເຂົາເຈົ້າໄດ້ຍົກຍ້າຍໄປຕັ້ງຖິ່ນຖານຢູ່ບ້ານໃໝ່.

**ເຊື້ອແມ່ກາຝາກຈາກຫອຍ**: ແມ່ນເຊື້ອພະຍາດທີ່ເກີດຈາກການສຳຜັດກັບຫອຍຊະນິດໜຶ່ງທີ່ອາໄສຢູ່ໃນຫ້ວຍໜອງຄອງນ້ຳຈືດ ຫຼື ໃນແມ່ນ້ຳ.

**ໂຄງການສ້າງເຂື່ອນເປັນອ່າງນ້ຳເພື່ອປ່ຽນແລວນ້ຳໄຫຼ**: ແມ່ນໂຄງການສ້າງເຂື່ອນດ້ວຍການສົ່ງນ້ຳຈາກແມ່ນ້ຳສາຍໜຶ່ງຜ່ານອຸໂມງຂະໜາດໃຫຍ່ໄປສູ່ແມ່ນ້ຳສາຍອື່ນອີກ.

**ກັງຫັນ ຫຼື ໃບພັດ**: ແມ່ນສ່ວນປະກອບຂອງເຂື່ອນໄຟຟ້າທີ່ຜະລິດກະແສໄຟຟ້າດ້ວຍແຮງນ້ຳຕົກ.

**ເຂດເໜືອເຂື່ອນ**: ແມ່ນເຂດພື້ນທີ່ນັບຕັ້ງແຕ່ໜ້າເຂື່ອນຂຶ້ນໄປເທິງ ຊຶ່ງໃນນັ້ນກໍ່ແມ່ນລວມທັງເຂດອ່າງນ້ຳທີ່ເກີດຈາກເຂື່ອນ ແລະ ເຂດພື້ນທີ່ຕອນເທິງຂອງແມ່ນ້ຳ.

**ກຸ່ມສ່ຽງ**: ໝາຍເຖິງປະຊາຊົນຜູ້ທີ່ອາດຈະໄດ້ຮັບຜົນກະທົບຈາກເຂື່ອນ ຫຼື ໂຄງການພັດທະນາຫຼາຍກວ່າໝູ່ ຊຶ່ງສ່ວນໃຫຍ່ກໍ່ແມ່ນເດັກນ້ອຍ, ຜູ້ເຖົ້າ, ແມ່ຍິງ, ຄົນເສຍອົງຄະ, ຊົນເຜົ່າສ່ວນນ້ອຍ ລວມທັງຄົນທ້ອງຖິ່ນ ຫຼື ຄົນພື້ນເມືອງ.

# ສາລະບານ


**ພາກ 1: ຂໍ້ມູນສຳຄັນທີ່ຄວນຮູ້ກ່ຽວກັບເຂື່ອນ .................... 9**

ເຂື່ອນແມ່ນຫຍັງ? .................... 9

ເຂື່ອນເຮັດໜ້າທີ່ຫຍັງ? .................... 9

ຢູ່ໃນປະເທດລາວມີການສ້າງເຂື່ອນຈັກບ່ອນແລ້ວ? .................... 10

ຜົນປະໂຫຍດ ແລະ ຄວາມສ່ຽງຈາກເຂື່ອນມີຄືແນວໃດ ? .................... 11

**ພາກ 2: ຜົນກະທົບຈາກເຂື່ອນ .................... 12**

ບົດເລື່ອງ: ບ້ານໃໝ່ໄດ້ຮັບຄວາມເສຍຫາຍໜັງຈາກການກໍ່ສ້າງເຂື່ອນ .................... 13

ຜົນກະທົບຈາກເຂື່ອນມີຫຍັງແດ່? .................... 14

ເຂື່ອນທີ່ເອົານ້ຳຈາກແມ່ນ້ຳສາຍໜຶ່ງໄປໃສ່ແມ່ນ້ຳສາຍອື່ນອີກ .................... 16

ການຍົກຍ້າຍປະຊາຊົນ .................... 17

ບັນຫາຈາກການຍົກຍ້າຍຈັດສັນທີ່ຢູ່ອາໄສ .................... 17

ບັນຫາກ່ຽວກັບການຊົດເຊີຍຜົນເສຍຫາຍຂອງປະຊາຊົນ .................... 19

**ພາກ 3: ທ່ານສາມາດເຮັດຫຍັງໄດ້ແດ່ຖ້າມີການສ້າງເຂື່ອນໃນເຂດພື້ນທີ່ຂອງທ່ານ .... 20**

ກົດໝາຍ ແລະ ນະໂຍບາຍຂອງລາວກ່ຽວກັບເຂື່ອນ .................... 20

ປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການແມ່ນໃຜ? .................... 21

ຄວາມຮັບຜິດຊອບຂອງເຈົ້າຂອງໂຄງການມີຫຍັງແດ່? .................... 22

ຄວາມຮັບຜິດຊອບຂອງລັດຖະບານມີຫຍັງແດ່? .................... 23

ການເຄື່ອນໄຫວຕ່າງໆທີ່ຊຸມຊົນສາມາດປະຕິບັດຮ່ວມກັນໄດ້ .................... 24

ເອກະສານອ້າງອີງດ້ານກົດໝາຍ .................... 25

ການຂໍອະນຸຍາດຈົດທະບຽນເພື່ອຈັດຕັ້ງກຸ່ມ .................... 25

ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ .................... 26

ຄຳຖາມທີ່ຄວນຖາມໃນກອງປະຊຸມເປີດກວ້າງມວນຊົນ .................... 27

ການສຳຫຼວດພື້ນທີ່ໂດຍຊຸມຊົນເອງ .................... 28

ສິດທິຂອງທ່ານທີ່ຈະໄດ້ຮັບການຊົດເຊີຍ ແລະ ການຍົກຍ້າຍຈັດສັນທີ່ຢູ່ອາໄສຢ່າງເປັນທຳ .................... 30

ການໃຫ້ຄວາມຊ່ວຍເຫຼືອໃນໄລຍະຍົກຍ້າຍ ແລະ ໄລຍະຂ້າມຜ່ານ .................... 34

ບັນຫາຂອງໂຄງການຟື້ນຟູຊີວິດການເປັນຢູ່ .................... 35

ຖ້າຫາກທ່ານມີບັນຫາຮ້ອງທຸກ .................... 36

ການກວດກາວຽກກໍ່ສ້າງ ແລະ ການຍົກຍ້າຍຈັດສັນທີ່ຢູ່ອາໄສ .................... 37

**ສະຫຼຸບ .................... 37**

ບ່ອນຕິດຕໍ່ພົວພັນໃນເວລາທ່ານມີບັນຫາ .................... 38

# ຂໍ້ມູນສຳຄັນທີ່ທ່ານຄວນຮູ້ກ່ຽວກັບເຂື່ອນ

## ◈ ເຂື່ອນແມ່ນຫຍັງ?

ເຂື່ອນແມ່ນຝາຍ ຫຼື ກຳແພງທີ່ສ້າງຂຶ້ນດ້ວຍສ່ວນປະສົມຂອງຫີນແຮ່, ຊາຍ, ປູນຊີມັງ ແລະ ນ້ຳ ເພື່ອປິດກັ້ນເສັ້ນທາງໄຫຼຂອງນ້ຳໃນແມ່ນ້ຳ. ນ້ຳທີ່ຍັ່ງຂື້ນຢູ່ໜ້າເຂື່ອນ ຫຼື ໜ້າຝາຍທີ່ໄດ້ສ້າງກັ້ນແມ່ນ້ຳນັ້ນຈະເຮັດໃຫ້ເກີດນ້ຳຖ້ວມຂັງພື້ນທີ່ດິນແລ້ວກາຍມາເປັນໜອງ ຫຼື ວັງນ້ຳຂະໜາດໃຫຍ່ຈາກສີມືຂອງຄົນ ຊຶ່ງພວກເຮົາເອີ້ນວ່າ ອ່າງເກັບນ້ຳ.

ນ້ຳບັນຈຸຢູ່ໃນອ່າງເກັບນ້ຳນັ້ນສາມາດນຳໄປຜະລິດກະແສໄຟຟ້າ, ສະໜອງນ້ຳຊົນລະປະທານ, ສາມາດຊ່ວຍໃນການໄປມາທາງເຮືອ ແລະ ນອກຈາກນັ້ນກໍ່ສາມາດຄວບຄຸມໄພນ້ຳຖ້ວມໄດ້. ເຂື່ອນຫຼາຍແຫ່ງສາມາດເຮັດໜ້າທີ່ໄດ້ຫຼາຍກວ່າໜຶ່ງດ້ານໃນສິ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ.

## ◈ ເຂື່ອນເຮັດໜ້າທີ່ຫຍັງແດ່?

ບາງເທື່ອພວກເຮົາຈະເຫັນຊາວນາສ້າງຝາຍນ້ຳລົ້ນຂະໜາດນ້ອຍເພື່ອກັກນ້ຳໄວ້ໃຫ້ແກ່ສັດຂອງຕົນກິນ ຫຼື ເພື່ອໃຊ້ນ້ຳສຳລັບການປູກຝັງໃນລະດູແລ້ງ. ຝາຍນ້ຳລົ້ນຂະໜາດນ້ອຍເຫຼົ່ານີ້ມີຜົນກະທົບໜ້ອຍທີ່ສຸດບໍ່ຄືກັບຝາຍ ຫຼື ເຂື່ອນຂະໜາດໃຫຍ່.

ໃນໂລກເຮົາປະຈຸບັນ, ລັດຖະບານ ແລະ ບັນດາບໍລິສັດເອກະຊົນທັງຫຼາຍພາກັນກໍ່ສ້າງເຂື່ອນຂະໜາດໃຫຍ່ທີ່ສຸດ. ໃນປະເທດລາວຂອງພວກເຮົາ, ເຂື່ອນທີ່ມີຂະໜາດໃຫຍ່ນັ້ນສ່ວນຫຼາຍກໍ່ແມ່ນສ້າງຂຶ້ນມາເພື່ອຜະລິດກະແສໄຟຟ້າຊຶ່ງພວກເຮົາເອີ້ນວ່າ ເຂື່ອນໄຟຟ້າພະລັງງານນ້ຳ. ເຂື່ອນໄຟຟ້າພະລັງງານນ້ຳເຫຼົ່ານີ້ໄດ້ນຳໃຊ້ນ້ຳເພື່ອປັ່ນໃບພັດຂອງເຄື່ອງຈັກ ຫຼື ເອີ້ນອີກຄຳໜຶ່ງວ່າ ກັງຫັນ. ການປັ່ນຂອງກັງຫັນເຮັດໃຫ້ເຄື່ອງຈັກສາມາດຜະລິດກະແສໄຟຟ້າໄດ້.




ເຂື່ອນມີຫຼາຍຮູບຊົງ ແລະ ຂະໜາດແຕກຕ່າງກັນ, ແຕ່ເຂື່ອນສ່ວນໃຫຍ່ຈະປະກອບດ້ວຍລັກສະນະທັງສາມຢ່າງທີ່ກ່າວມາເທິງນັ້ນ.

ເຖິງຢ່າງໃດກໍ່ດີ, ເຂື່ອນບາງແຫ່ງທີ່ກ່າວມານີ້ຜະລິດກະແສໄຟຟ້າເພື່ອຮັບໃຊ້ຄົນລາວ. ແຕ່ໃນນັ້ນ, ມີເຂື່ອນຫຼາຍແຫ່ງຜະລິດກະແສໄຟຟ້າເພື່ອຂາຍໃຫ້ປະເທດໄທ, ຫວຽດນາມ ແລະ ກຳປູເຈຍ. ການສົ່ງກະແສໄຟຟ້າຈາກເຂື່ອນໄປຫາເມືອງຕ່າງໆນັ້ນ, ລັດຖະບານຈຳເປັນຕ້ອງໃຊ້ສາຍໄຟຂະໜາດໃຫຍ່. ເງິນທີ່ໄດ້ຈາກການຂາຍກະແສໄຟຟ້າ ກໍ່ຕົກໄປເປັນຂອງບໍລິສັດເອກະຊົນ ແລະ ລັດຖະບານໝົດ.

## ◈ ຢູ່ໃນປະເທດລາວມີການສ້າງເຂື່ອນຈັກບ່ອນແລ້ວ?

ມາຮອດປະຈຸບັນ, ລັດຖະບານລາວ ແລະ ບໍລິສັດເອກະຊົນໄດ້ກໍ່ສ້າງເຂື່ອນໃນລາວແລ້ວທັງໝົດ 9 ແຫ່ງເພື່ອຜະລິດກະແສໄຟຟ້າ. ໃນປະຈຸບັນນີ້, ມີເຂື່ອນອີກຈຳນວນໜຶ່ງກຳລັງຢູ່ໃນໄລຍະດຳເນີນການກໍ່ສ້າງຢູ່. ໃນໄລຍະແຕ່ນີ້ ຫາ 20 ປີຕໍ່ໜ້າ, ລັດຖະບານໄດ້ວາງແຜນກໍ່ສ້າງເຂື່ອນຕື່ມອີກໃຫ້ໄດ້ຫຼາຍກວ່າ 55 ແຫ່ງ. ໃນນັ້ນ, 8 ແຫ່ງແມ່ນ ມີແຜນກໍ່ສ້າງໃສ່ແມ່ນ້ຳຂອງ. ສ່ວນທີ່ເຫຼືອກໍ່ແມ່ນມີແຜນກໍ່ສ້າງຂຶ້ນຕາມສາຂາແມ່ນ້ຳຂອງ ຊຶ່ງເປັນແມ່ນ້ຳໄຫຼລົງສູ່ແມ່ນ້ຳຂອງ. ພະລັງງານໄຟຟ້າທີ່ຜະລິດໄດ້ຈາກເຂື່ອນສ່ວນໃຫຍ່ເຫຼົ່ານີ້ຈະໄດ້ຂາຍໃຫ້ປະເທດອື່ນ.




ແຜນທີ່ກ່ຽວກັບໂຄງການສ້າງເຂື່ອນໃນລາວ.

## ◈ ຜົນປະໂຫຍດ ແລະ ຄວາມສ່ຽງຈາກເຂື່ອນມີຄືແນວໃດ?

ໂຄງການສ້າງເຂື່ອນສາມາດນຳເອົາໄພອັນຕະລາຍ ແລະ ຜົນປະໂຫຍດມາສູ່ຄົນເຮົາ. ເຂື່ອນຂະໜາດໃຫຍ່ອາດນຳເອົາເງິນພ້ອມດ້ວຍໄຟຟ້າມາໃຫ້ລັດຖະບານ ແລະ ບໍລິສັດໃຫຍ່. ບາງເທື່ອເງິນ ແລະ ໄຟຟ້າທີ່ໄດ້ມາຈາກເຂື່ອນ ນັ້ນກໍ່ນຳໄປຊ່ວຍເຫຼືອປັບປຸງຊີວິດການເປັນຢູ່ຂອງຊາວຊົນນະບົດ ແຕ່ບາງເທື່ອເຂື່ອນກໍ່ນຳເອົາຜົນເສຍຫາຍຫຼາຍກວ່າຜົນປະໂຫຍດມາສູ່ພວກເຮົາ.



**ເຂື່ອນເອົານ້ຳ ແລະ ພະລັງງານໄປໃຫ້ຄົນຮັ່ງມີ**



**ປະຊາຊົນຜູ້ໄດ້ຮັບຜົນກະທົບຈາກເຂື່ອນຈະບໍ່ໄດ້ຮັບຜົນປະໂຫຍດເຫຼົ່ານີ້ເລີຍ ແລະໃນທີ່ສຸດເຂົາເຈົ້າກໍ່ມີແຕ່ດິນບໍ່ດີສຳລັບປູກຝັງ**

ຫຼັງຈາກການສ້າງເຂື່ອນສຳເລັດແລ້ວອາດຈະເຮັດໃຫ້ຊາວບ້ານຜູ້ທີ່ເຄີຍທຳມາຫາກິນໂດຍອາໄສແມ່ນ້ຳ ເຊັ່ນການຫາປາ, ການປູກຝັງ ແລະ ລ້ຽງສັດ, ການນຳໃຊ້ນ້ຳຈາກແມ່ນ້ຳ ແລະ ການຂົນສົ່ງທາງນ້ຳ ໄດ້ຮັບຄວາມທຸກຍາກຫຼາຍກວ່າເກົ່າ. ຖ້າວ່າເຮືອນຊານບ້ານຊ່ອງ ແລະ ໄຮ່ນາຮົ້ວສວນຖືກນ້ຳຈາກເຂື່ອນຖ້ວມ ຊາວບ້ານຈຳເປັນຕ້ອງຊອກຫາທີ່ຢູ່ອາໄສ ແລະ ບ່ອນທຳມາຫາກິນໃໝ່. ຖ້ານ້ຳໃນແມ່ນ້ຳຫາກຂຸ່ນ ແລະ ເປື້ອນເປິະ ຊາວບ້ານກໍ່ບໍ່ສາມາດນຳມາກິນມາໃຊ້ໄດ້ອີກຕໍ່ໄປ ຫຼື ບໍ່ກໍ່ເຮັດໃຫ້ຊາວບ້ານຫາປາບໍ່ໄດ້ດີຄືເກົ່າ. ຖ້າວ່າລະດັບນ້ຳໃນແມ່ນ້ຳເພີ່ມສູງຂຶ້ນກໍ່ຈະເຮັດໃຫ້ນ້ຳຖ້ວມ ຫຼື ລະດັບນ້ຳຫຼຸດລົງກໍ່ຈະເຮັດໃຫ້ແຫ້ງແລ້ງ. ສະນັ້ນ, ໄພນ້ຳຖ້ວມ ຫຼື ໄພແຫ້ງແລ້ງລ້ວນແລ້ວແຕ່ເປັນອັນຕະລາຍຮ້າຍແຮງແກ່ຊີວິດ ແລະ ຊັບສິນຂອງຊາວບ້ານຊຶ່ງບໍ່ແມ່ນບັນຫາເລັກນ້ອຍເລີຍ.

ຖ້າວ່າຈະມີໂຄງການກໍ່ສ້າງເຂື່ອນໃນເຂດທ້ອງຖິ່ນຂອງທ່ານ ສິ່ງສຳຄັນ ແລະ ຈຳເປັນສຳລັບທ່ານກໍ່ຄືຈະຕ້ອງເຂົ້າໃຈວ່າເຂື່ອນນັ້ນມີຜົນກະທົບຕໍ່ທ່ານ ແລະ ຊຸມຊົນຂອງທ່ານຄືແນວໃດ.



## ພາກ 2

# ຜົນກະທົບຈາກເຂື່ອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*************

### ນະໂຍບາຍກ່ຽວກັບເຂື່ອນ

ລັດຖະບານ ສ.ປ.ປ ລາວ ມີນະໂຍບາຍແຫ່ງຊາດກ່ຽວກັບເຂື່ອນ ຊຶ່ງນະໂຍບາຍເຫຼົ່ານີ້ຕົ້ນຕໍກໍ່ແມ່ນອີງໃສ່ຫຼັກການ ສາມດ້ານຄື:

1. ຄວາມຍືນຍົງດ້ານເສດຖະກິດ: ຄືການນໍາໃຊ້ຊັບພະຍາກອນຢ່າງສົມເຫດສົມຜົນເພື່ອປົກປັກຮັກສາໃຫ້ສາມາດນໍາໃຊ້ໄດ້ຕໍ່ໄປໃນອະນາຄົດຍາວນານ
2. ຄວາມຍືນຍົງຂອງສັງຄົມ: ຄືຄວາມເຂົ້າໃຈຊຶ່ງກັນແລະກັນ ແລະ ການມີສ່ວນຮ່ວມຂອງຊຸມຊົນ
3. ຄວາມຍືນຍົງຂອງລະບົບນິເວດ ຫຼື ຄວາມຍືນຍົງຂອງຄວາມສໍາພັນລະຫວ່າງສິ່ງທີ່ມີຊີວິດ ແລະ ສິ່ງແວດລ້ອມ: ຫຼີກເວັ້ນການກະທໍາໃດໆທີ່ເປັນການທໍາລາຍສິ່ງແວດລ້ອມ

ການທີ່ໂຄງການສ້າງເຂື່ອນໃດໜຶ່ງຈະສາມາດເຮັດໃຫ້ທຸກຄົນໄດ້ຮັບຜົນປະໂຫຍດໄດ້ກໍ່ຕໍ່ເມື່ອວ່າໂຄງການສ້າງເຂື່ອນແຫ່ງນັ້ນປະຕິບັດຫຼັກການສາມຢ່າງທີ່ກ່າວມານັ້ນໄດ້ຄົບຖ້ວນ. ແຕ່ວ່າຢູ່ໃນໂລກເຮົານີ້, ມີໂຄງການສ້າງເຂື່ອນຫຼາຍແຫ່ງບໍ່ສາມາດປະຕິບັດຕາມຫຼັກການເຫຼົ່ານີ້ໄດ້ຄົບຖ້ວນ ຈຶ່ງກໍ່ໃຫ້ເກີດຜົນເສຍຫາຍຢ່າງໃຫຍ່ຫຼວງຕໍ່ແມ່ນໍ້າລໍາເຊ, ປະຊາຊົນ ແລະ ຊຸມຊົນ.

ປະຈຸບັນຢູ່ທົ່ວໂລກ ມີປະຊາຊົນປະມານ 40 ຫາ 80 ລ້ານຄົນຖືກບັງຄັບໃຫ້ຍົກຍ້າຍໜີຈາກບ້ານເຮືອນ ແລະ ດິນດອນຕອນຫຍ້າຂອງຕົນເພື່ອຫຼີກທາງໃຫ້ແກ່ໂຄງການສ້າງເຂື່ອນ. ນອກນັ້ນແລ້ວ, ຍັງມີປະຊາຊົນອີກຈໍານວນຫຼາຍລ້ານຄົນທີ່ອາໄສດໍາລົງຊີວິດຢູ່ເຂດລຸ່ມເຂື່ອນໄດ້ຮັບຜົນກະທົບຈາກເຂື່ອນ. ສ່ວນຢູ່ໃນລາວເຮົາມາຮອດດຽວນີ້ມີປະຊາຊົນຈໍານວນຫຼາຍກວ່າສອງແສນຄົນໄດ້ຮັບຜົນກະທົບຈາກເຂື່ອນ ແລະ ປະຊາຊົນເຫຼົ່ານີ້ສ່ວນໃຫຍ່ກໍ່ກາຍມາເປັນຄົນທຸກຍາກກວ່າເກົ່າ ຍ້ອນວ່າເຂື່ອນໄດ້ສ້າງຄວາມເສຍຫາຍໃຫ້ແກ່ບ່ອນທໍາມາຫາກິນ, ວັດທະນະທໍາ ແລະ ຊຸມຊົນຂອງເຂົາເຈົ້າ.

ເຂື່ອນເຮັດໃຫ້ເກີດໄພນໍ້າຖ້ວມບ່ອນຢູ່ອາໄສຂອງສັດທີ່ສໍາຄັນທີ່ສຸດຢູ່ໃນໂລກຈໍານວນໜຶ່ງລວມທັງພື້ນທີ່ດິນນາອັນອຸດົມສົມບູນ. ເຂື່ອນຍັງເຮັດໃຫ້ແມ່ນໍ້າລໍາເຊຫຼາຍແຫ່ງໄດ້ຮັບຄວາມເສຍຫາຍ, ທໍາລາຍແຫຼ່ງກໍາເນີດຂອງປາ ແລະ ເຮັດໃຫ້ການຫາປາຫຼຸດໜ້ອຍຖອຍລົງ. ປາ, ສັດ ແລະ ພືດພັນບາງຊະນິດກໍ່ຖືກດັບສູນໄປ.

ພາກນີ້ໄດ້ອະທິບາຍໃຫ້ຮູ້ເຖິງຜົນກະທົບຂອງເຂື່ອນທີ່ມີຕໍ່ຊຸມຊົນ ແລະ ຊັບພະຍາກອນທໍາມະຊາດ. ເລື່ອງທີ່ນໍາມາສະເໜີໃນພາກນີ້ເປັນເລື່ອງຈິງທີ່ເກີດຂຶ້ນຈາກຜົນກະທົບຂອງໂຄງການເຂື່ອນໄຟຟ້າເທີນ-ຫີນບູນ ເພື່ອສະແດງໃຫ້ເຫັນຄວາມຈິງທີ່ວ່າເຂື່ອນນັ້ນມີຜົນກະທົບແທ້ ແລະ ສາມາດເຮັດໃຫ້ປະຊາຊົນທຸກຍາກລົງຫຼາຍກວ່າເກົ່າໄດ້ຄືແນວໃດ ແທນທີ່ຈະເຮັດໃຫ້ປະຊາຊົນມີຄວາມຢູ່ດີກິນດີກວ່າເກົ່າ. ນອກນັ້ນ, ພາກນີ້ຍັງໄດ້ອະທິບາຍ ແລະ ຍົກໃຫ້ເຫັນບັນຫາຈໍານວນໜຶ່ງທີ່ເກີດຂຶ້ນຈາກການຍົກຍ້າຍຈັດສັນບ່ອນຢູ່ອາໄສ ແລະ ການຊົດເຊີຍຄ່າເສຍຫາຍໃຫ້ແກ່ປະຊາຊົນທີ່ໄດ້ຮັບຜົນກະທົບຈາກເຂື່ອນ.

## ✷ ບ້ານໃໝ່: ໄດ້ຮັບຄວາມເສຍຫາຍຫຼັງຈາກການກໍ່ສ້າງເຂື່ອນ

ບ້ານໃໝ່ຕັ້ງຢູ່ໃນເຂດນ້ຳຫີນບູນ ພາກກາງຂອງປະເທດລາວ. ໃນປີ 1998, ລັດຖະບານລາວໄດ້ກໍ່ສ້າງໂຄງການເຂື່ອນໄຟຟ້າເທີນ-ຫີນບູນ ດ້ວຍການສ້າງເຂື່ອນໃສ່ນ້ຳເທີນ. ເພື່ອຜະລິດກະແສໄຟຟ້າ ເພິ່ນໄດ້ປ່ອຍນ້ຳຜ່ານອຸໂມງລອດພູລົງໄປສູ່ນ້ຳໄຮ ແລະ ນ້ຳຫີນບູນ. ບັນຫານີ້ເຮັດໃຫ້ລະດັບນ້ຳໃນແມ່ນ້ຳໄຮ ແລະ ນ້ຳຫີນບູນເພີ່ມຫຼາຍຂຶ້ນກວ່າເກົ່າ, ແຕ່ກົງກັນຂ້າມນ້ຳໃນນ້ຳເທີນພັດບົກແຫ້ງລົງກວ່າເກົ່າຫຼາຍ. ດຽວນີ້, ນ້ຳໃນນ້ຳຫີນບູນຂຸ່ນຫຼາຍກວ່າຕອນບໍ່ທັນໄດ້ສ້າງເຂື່ອນ ແລະ ທັງໄຫຼໄວກວ່າແຕ່ກ່ອນ. ການປ່ຽນແປງຂອງລະດັບນ້ຳຄືແນວນີ້ໄດ້ສົ່ງຜົນກະທົບບໍ່ດີແກ່ປະຊາຊົນຈຳນວນຫຼວງຫຼາຍ.
ຊາວບ້ານທີ່ອາໄສຢູ່ໃນບ້ານໃໝ່ເວົ້າວ່າກ່ອນການກໍ່ສ້າງເຂື່ອນໃນນ້ຳຫີນບູນນັ້ນມີປາຈຳນວນຫຼວງຫຼາຍ, ແຕ່ຫຼັງຈາກກໍ່ສ້າງເຂື່ອນແລ້ວຈຳນວນປາທີ່ເຄີຍມີກໍ່ຫຼຸດໜ້ອຍຖອຍລົງ ແລະ ດຽວນີ້ພວກເຂົາເຈົ້າສາມາດຫາໄດ້ແຕ່ປານ້ອຍເທົ່ານັ້ນ. ແຕ່ກ່ອນ, ນ້ຳຫີນບູນມີວັງເລິກເປັນບ່ອນຢູ່ອາໄສຂອງປານ້ອຍໃຫຍ່ທັງຫຼາຍໃນລະດູແລ້ງ, ແຕ່ເມື່ອສ້າງເຂື່ອນແລ້ວ ວັງເລິກທີ່ເຄີຍມີກໍ່ຕື້ນເຂີນຍ້ອນການທັບຖົມຂອງຕົມ, ດິນ ແລະ ສິ່ງເສດເຫຼືອອື່ນໆ.

ດຽວນີ້, ຫຼາຍຄອບຄົວຕ້ອງສູນເສຍເຂົ້ານາປີຂອງຕົນທຸກໆປີຍ້ອນໄພນ້ຳຖ້ວມ. ປະກົດການໄພນ້ຳຖ້ວມດຽວນີ້ແມ່ນເກີດຂຶ້ນຕິດຕໍ່ກັນເລື້ອຍໆ ແລະ ກໍ່ຖ້ວມດົນນານກວ່າຄາວແຕ່ກ່ອນມີເຂື່ອນ. ນັບຕັ້ງແຕ່ສ້າງເຂື່ອນມາ ນອກຈາກຈະເກີດນ້ຳຖ້ວມຖີ່ຂຶ້ນ ແລະ ຖ້ວມດົນແລ້ວ ກໍ່ຍັງເກີດການເຊາະເຈື່ອນຫຼາຍຂຶ້ນຕາມຕາຝັ່ງນ້ຳຫີນບູນ. ຊາວບ້ານເວົ້າວ່າ ບັນຫານີ້ເກີດມາຈາກການຂຶ້ນ ແລະ ລົງຂອງລະດັບນ້ຳ ແລະ ຍ້ອນມີນ້ຳຫລາຍ ຊາວບ້ານບໍ່ສາມາດປູກພືດຜັກຕາມແຄມນ້ຳໄດ້ຄືເກົ່າອີກຕໍ່ໄປ.

ປະຊາຊົນໃນບ້ານໃໝ່ໄດ້ຮັບຄ່າຊົດເຊີຍສຳລັບຜົນເສຍຫາຍຂອງເຂົາເຈົ້າຈຳນວນໜຶ່ງຈາກບໍລິສັດພະລັງງານໄຟຟ້າ, ແຕ່ຄ່າທົດແທນທີ່ໄດ້ມານັ້ນກໍ່ບໍ່ພຽງພໍ ແລະ ບໍ່ສົມກັບສິ່ງທີ່ເຂົາເຈົ້າໄດ້ສູນເສຍໄປ.

## ✷ ບ້ານໃໝ່ໃນທີ່ນີ້ເປັນຊື່ສົມມຸດ



# ຜົນກະທົບຈາກເຂື່ອນມີຫຍັງແດ່?




ເຂື່ອນເຮັດໃຫ້ປາດັບສູນ ແລະ ທຳລາຍການປະມົງ
ຈຳນວນປາໃນເຂດນ້ຳເໜືອເຂື່ອນຫຼຸດໜ້ອຍຖອຍລົງ ຍ້ອນວ່າປາບໍ່ສາມາດເຄື່ອນຍ້າຍຜ່ານເຂື່ອນຂຶ້ນໄປໄດ້. ການປ່ຽນແປງຂອງກະແສການໄຫຼຂອງນ້ຳ ແລະ ຄຸນນະພາບຂອງນ້ຳຢູ່ເຂດກ້ອງເຂື່ອນ ເຮັດໃຫ້ປາບໍ່ສາມາດເຕີບໃຫຍ່ຂະຫຍາຍໂຕໄດ້. ຜົນຕາມມາກໍ່ຄື ປະຊາຊົນຜູ້ທີ່ອາໄສປາເປັນອາຫານ ແລະ ອາໄສລາຍໄດ້ຈາກປາໄດ້ຮັບຜົນກະທົບບໍ່ດີ.
ເຂື່ອນເຮັດໃຫ້ປະຊາຊົນຂາດເຂີນນ້ຳ
ເຂື່ອນ ແລະ ອ່າງເກັບນ້ຳຂອງເຂື່ອນຍາດແຍ່ງເອົານ້ຳໃຊ້ຈາກແມ່ນ້ຳທີ່ຊາວນາ ແລະ ຊາວປະມົງເຄີຍໃຊ້ເພື່ອນຳໄປຜະລິດໄຟຟ້າໃຫ້ແກ່ກຸ່ມຄົນຜູ້ທີ່ມີເງິນສາມາດຈ່າຍຄ່າໄຟຟ້າໄດ້.
ເຂື່ອນເຮັດໃຫ້ຜົນເກັບກ່ຽວຂອງປະຊາຊົນຫຼຸດລົງ
ເຂື່ອນເຮັດໃຫ້ເກີດນ້ຳຖ້ວມທົ່ງນາທີ່ອຸດົມສົມບູນຫຼາຍແຫ່ງ. ນອກນັ້ນກໍ່ຍັງອັດຕົມຝຸ່ນຕົມບໍ່ໃຫ້ໄຫຼລົງໄປສູ່ເຂດກ້ອງເຂື່ອນເພື່ອເຮັດໃຫ້ຜົນລະປູກຂອງປະຊາຊົນງອກງາມ. ນ້ຳທີ່ປ່ອຍອອກຈາກອ່າງເກັບນ້ຳຂອງເຂື່ອນສາມາດເຊາະເຈື່ອນຮົ້ວສວນແຄມນ້ຳຂອງປະຊາຊົນ ໃຫ້ເກີດຄວາມເສຍຫາຍ.
ເຂື່ອນເຮັດໃຫ້ນ້ຳເປື້ອນເປິະ ແລະ ເປັນພິດ
ຄຸນນະພາບນ້ຳບໍ່ດີອັນເນື່ອງມາຈາກເຂື່ອນເຮັດໃຫ້ປະຊາຊົນ ແລະ ສັດທີ່ອາໄສຢູ່ເຂດກ້ອງເຂື່ອນເຈັບໄຂ້ໄດ້ປ່ວຍ.

## ◈ ເຂື່ອນທີ່ເອົານ້ຳຈາກແມ່ນ້ຳສາຍໜຶ່ງໄປໃສ່ແມ່ນ້ຳສາຍອື່ນອີກ



ໂຄງການສ້າງເຂື່ອນຫຼາຍແຫ່ງໃນລາວໄດ້ເອົານ້ຳຈາກແມ່ນ້ຳສາຍໜຶ່ງຜ່ານອຸໂມງໄປສູ່ແມ່ນ້ຳສາຍອື່ນອີກ. ພວກເຮົາເອີ້ນເຂື່ອນ ແລະ ອຸໂມງເຫຼົ່ານີ້ວ່າໂຄງການສ້າງເຂື່ອນປ່ຽນແລວນ້ຳ. ໃນໂຄງການເຫຼົ່ານີ້ ແມ່ນເພິ່ນສ້າງເຂື່ອນໃສ່ແມ່ນ້ຳຢູ່ເທິງພູ ໂດຍສົ່ງນ້ຳຈາກແມ່ນ້ຳຜ່ານອຸໂມງລົງຕາມຕີນພູເຂົ້າໄປຫາໂຮງໄຟຟ້າ ແລະ ນ້ຳທີ່ສົ່ງມານັ້ນຈະໄປພັດກົງນ້ຳທີ່ພວກເຮົາເອີ້ນກັນວ່າໃບພັດນ້ຳ ຫຼື ກັງຫັນພັດນ້ຳເພື່ອຜະລິດພະລັງງານໄຟຟ້າ. ຫຼັງຈາກນັ້ນ, ນ້ຳທີ່ໃຊ້ພັດກັງຫັນເພື່ອຜະລິດໄຟຟ້າກໍ່ຈະໄຫຼລົງໄປສູ່ແມ່ນ້ຳສາຍອື່ນອີກ. ◈

**ໂຄງການສ້າງເຂື່ອນປ່ຽນແລວນ້ຳມີຜົນກະທົບບໍ່ດີຫຼາຍຢ່າງຕໍ່ແມ່ນ້ຳລຳເຊ**



## ◈ ການຍົກຍ້າຍປະຊາຊົນ

ເມື່ອນ້ຳຈາກເຂື່ອນຂຶ້ນມາຖ້ວມບ້ານເຮືອນ ແລະ ທີ່ດິນຂອງປະຊາຊົນ, ແນ່ນອນວ່າເຂົາເຈົ້າຈະບໍ່ສາມາດອາໄສຢູ່ບ່ອນນັ້ນໄດ້ອີກຕໍ່ໄປ. ການຍົກຍ້າຍປະຊາຊົນອອກຈາກບ້ານເຮືອນຂອງເຂົາເຈົ້າຖືເປັນບັນຫາໃຫຍ່ທີ່ສຸດຊຶ່ງເກີດຈາກເຂື່ອນຂະໜາດໃຫຍ່.

ພາຍຫຼັງທີ່ໄດ້ຍົກຍ້າຍໄປຕັ້ງຖິ່ນຖານຢູ່ບ່ອນໃໝ່ຍ້ອນໂຄງການສ້າງເຂື່ອນແລ້ວ ປະຊາຊົນສ່ວນໃຫຍ່ມັກຈະຕົກທຸກໄດ້ຍາກຫຼາຍກວ່າເກົ່າ. ດິນດອນຕອນຫຍ້າບ່ອນໃໝ່ທີ່ເຂົາເຈົ້າຍົກຍ້າຍໄປຢູ່ນັ້ນບໍ່ມີຄວາມອຸດົມສົມບູນ. ການທຳມາຫາກິນໃນເຂດທີ່ຕັ້ງຖິ່ນຖານໃໝ່ອາດຈະເຮັດໃຫ້ເຂົາເຈົ້າບໍ່ສາມາດມີອາຫານກຸ້ມຢູ່ກຸ້ມກິນໄດ້ ຫຼື ບໍ່ ກໍ່ບໍ່ສາມາດຫາລາຍໄດ້ພຽງພໍເພື່ອມາລ້ຽງຄອບຄົວຂອງເຂົາເຈົ້າ. ຮ້າຍແຮງໄປກວ່ານັ້ນ ເຂົາເຈົ້າກໍ່ອາດຈະບໍ່ສາມາດເຮັດໄຮ່ເຮັດນາ ຫຼື ຫາປູຫາປາໄດ້. ເມື່ອນ້ຳຖ້ວມບ້ານ, ຊາວບ້ານທີ່ອາໄສຢູ່ໃນບ້ານນັ້ນສ່ວນໃຫຍ່ມັກຈະພົບບັນຫາການຍ້າຍບ່ອນຢູ່ອາໄສໄປຢູ່ຕາມສະຖານທີ່ຕ່າງໆ ຊຶ່ງເປັນເຫດໃຫ້ເຂົາເຈົ້າຕ້ອງພັດພາກຈາກໝູ່ເພື່ອນ ແລະ ຍາດຕິພີ່ນ້ອງຜູ້ທີ່ສາມາດໃຫ້ການຊ່ວຍເຫຼືອແກ່ເຂົາເຈົ້າໄດ້.

ສະຖານທີ່ວັດທະນະທຳ ແລະ ສັກກາລະບູຊາບັນພະບຸລຸດອາດຈະຖືກນ້ຳຖ້ວມ ຫຼື ຖືກທຳລາຍໃນລະຫວ່າງການກໍ່ສ້າງໂຄງການເຂື່ອນ ຊຶ່ງບັນຫານີ້ຈະສ້າງຄວາມເສົ້າໝອງ ແລະ ຜົນກະທົບທາງດ້ານຈິດໃຈໃຫ້ແກ່ປະຊາຊົນເປັນຢ່າງຍິ່ງ. ເມື່ອປະຊາຊົນຈາກຊົນນະບົດຍົກຍ້າຍໄປຢູ່ໃນຕົວເມືອງໃຫຍ່ ເຂົາເຈົ້າມັກຈະປະສົບບັນຫາໃໝ່ໆຫຼາຍຢ່າງ ເປັນຕົ້ນວ່າ ບັນຫາການຕິດເຫຼົ້າເມົາສຸລາ, ຄວາມຮູ້ສຶກມີປົມດ້ອຍ, ການໃຊ້ຄວາມຮຸນແຮງຕໍ່ກັນ, ການຕິດເຊື້ອພະຍາດ ຫຼື ແມ່ນແຕ່ການຂ້າຕົວຕາຍ ທັງໝົດເຫຼົ່ານີ້ມັກຈະເກີດຂຶ້ນໃນໝູ່ປະຊາຊົນທີ່ຖືກຍົກຍ້າຍຍ້ອນເຂື່ອນ.




## ◈ ບັນຫາຈາກການຍົກຍ້າຍຈັດສັນທີ່ຢູ່ອາໄສ

ເມື່ອປະຊາຊົນຕ້ອງໄດ້ຍົກຍ້າຍຈາກບ້ານເກີດເມືອງນອນຂອງຕົນຍ້ອນໂຄງການສ້າງເຂື່ອນ, ລັດຖະບານ ແລະ ເຈົ້າຂອງໂຄງການເປັນຜູ້ຮັບຜິດຊອບໃນການຍົກຍ້າຍເຂົາເຈົ້າໄປຢູ່ບ້ານໃໝ່. ລັດຖະບານອາດຈະຍົກຍ້າຍເຂົາເຈົ້າໄປອາໄສຢູ່ນຳບ້ານອື່ນ ຫຼື ບໍ່ ກໍ່ຕັ້ງບ້ານໃໝ່ໃຫ້ແກ່ເຂົາເຈົ້າກໍ່ເປັນໄດ້. ສ່ວນຢູ່ໃນປະເທດລາວ, ມີກົດໝາຍຮອງຮັບ ແລະ ໃຫ້ສິດທິແກ່ປະຊາຊົນໃຫ້ເຂົາເຈົ້າໄດ້ຮັບການຍົກຍ້າຍຈັດສັນຢ່າງເປັນທຳ (ເບິ່ງໜ້າ 30).

ນັກກໍ່ສ້າງເຂື່ອນມັກຈະໃຫ້ຄຳໝັ້ນສັນຍາຢູ່ສະເໝີວ່າຫຼັງຈາກການກໍ່ສ້າງເຂື່ອນແລ້ວປະຊາຊົນຈະມີຊີວິດການເປັນຢູ່ດີຂຶ້ນ. ພວກເຂົາສັນຍາກັບປະຊາຊົນວ່າ ຈະເຮັດໃຫ້ປະຊາຊົນມີວຽກເຮັດງານທຳ, ມີບ້ານເຮືອນຫຼັງໃໝ່ໃຫຍ່ໂຕ, ມີໄຟຟ້າ ແລະ ນ້ຳກິນນ້ຳໃຊ້ຢ່າງສະດວກສະບາຍ. ຫຼັງຈາກການຍົກຍ້າຍຈັດສັນທີ່ຢູ່ອາໄສໃໝ່ແລ້ວ ບາງຄັ້ງປະຊາຊົນຈຳນວນໜ້ອຍກໍ່ມີເຮືອນຢູ່ດີລື່ນເກົ່າໜ້ອຍໜຶ່ງ, ແຕ່ສ່ວນຫຼາຍແລ້ວແມ່ນບໍ່ມີເຮືອນຢູ່ອາໄສ. ຖ້າວ່າເຂົາເຈົ້າໄດ້ໃຊ້ນ້ຳໃຊ້ໄຟຟ້າ ແຕ່ເຂົາເຈົ້າກໍ່ຕ້ອງຈ່າຍຄ່ານ້ຳ ແລະ ຄ່າໄຟຟ້າດ້ວຍຕົນເອງທັງໝົດ. ສຸດທ້າຍປະຊາຊົນກໍ່ບໍ່ສາມາດມີເງິນພໍທີ່ຈະຈ່າຍຄ່ານ້ຳຄ່າໄຟໄດ້.

ເມື່ອຍົກຍ້າຍໄປຢູ່ແຫ່ງໃໝ່ແລ້ວ ປະຊາຊົນມັກຈະໄດ້ຮັບທີ່ດິນແຄບກວ່າທີ່ດິນເກົ່າທີ່ເຂົາເຈົ້າເຄີຍມີໃນເມື່ອກ່ອນ ແລະ ອາດຈະບໍ່ອຸດົມສົມບູນຄືດິນເກົ່າຂອງເຂົາເຈົ້າ. ດັ່ງນັ້ນຈຶ່ງເຮັດໃຫ້ເຂົາເຈົ້າບໍ່ສາມາດປູກຝັງ, ລ້ຽງສັດ, ຫາປາ ຫຼື ຊອກຢູ່ຫາກິນໄດ້ເໝືອນດັ່ງແຕ່ກ່ອນ.

ເມື່ອປະຊາຊົນຖືກຍົກຍ້າຍໄປອາໄສຢູ່ນຳບ້ານອື່ນ, ປະຊາຊົນຜູ້ທີ່ອາໄສຢູ່ບ້ານນັ້ນມາກ່ອນກໍ່ບໍ່ຢາກໃຫ້ຜູ້ຍົກຍ້າຍເຂົ້າມາຢູ່ໃໝ່ໃຊ້ດິນ, ນໍ້າ ແລະ ຊັບພະຍາກອນອື່ນໆຮ່ວມກັນກັບເຂົາເຈົ້າ. ບາງເທື່ອຜູ້ຍົກຍ້າຍມາຢູ່ຮ່ວມໃນບ້ານນັ້ນພັດແມ່ນຊົນເຜົ່າຕ່າງກັນ ແລະມີຮີດຄອງປະເພນີແຕກຕ່າງກັນ ຊຶ່ງບັນຫານີ້ສາມາດເຮັດໃຫ້ເກີດຂໍ້ຂັດແຍ່ງກັນລະຫວ່າງຜູ້ມາຢູ່ໃໝ່ ແລະ ຜູ້ຢູ່ເກົ່າ.

ຖ້າວ່າປະຊາຊົນທີ່ອາໄສຢູ່ໃນບ້ານນັ້ນມາກ່ອນຕ້ອງໄດ້ແບ່ງສັນປັນສ່ວນທີ່ດິນ ແລະ ຊັບພະຍາກອນໃນບ້ານຂອງຕົນໃຫ້ກັບຜູ້ຍົກຍ້າຍມາຢູ່ໃໝ່ ສິ່ງສຳຄັນໂຄງການຕ້ອງໃຫ້ຄ່າຊົດເຊີຍ ຫຼື ທົດແທນແກ່ເຂົາເຈົ້າ. ຊາວບ້ານທີ່ອາໄສຢູ່ມາກ່ອນນັ້ນກໍ່ຄວນຈະໄດ້ຮັບຄ່າທົດແທນ ຫຼື ຊົດເຊີຍຈົນກວ່າຈະໝົດອາຍຸໂຄງການໃນເມື່ອວ່າເຂົາເຈົ້າກໍ່ໄດ້ຮັບຜົນກະທົບຄືກັນ.



**ປະຊາຊົນຫຼາຍຄົນຖືກຍົກຍ້າຍຍ້ອນເຂື່ອນເພື່ອໃຫ້ໄປຕັ້ງຖິ່ນຖານໃໝ່ຢູ່ໃນເຂດພື້ນທີ່ດິນບໍ່ມີຄວາມອຸດົມສົມບູນ ຫຼື ຢູ່ໃນພື້ນທີ່ສູງຊັນເກີນກວ່າຈະສາມາດສັບຊ່າວເຮັດໄຮ່ທຳນາໄດ້.**

## ◈ ບັນຫາກ່ຽວກັບການຊົດເຊີຍຜົນເສຍຫາຍຂອງປະຊາຊົນ

ຄ່າຊົດເຊີຍ ຫຼື ທົດແທນຜົນເສຍຫາຍ ໝາຍເຖິງເງິນ ຫຼື ວັດຖຸສິ່ງຂອງທີ່ປະຊາຊົນໄດ້ຮັບເປັນຄ່າຊົດເຊີຍ ຫຼື ທົດແທນແກ່ຊັບສິນ ຫຼື ສິ່ງຂອງທີ່ເຂົາເຈົ້າໄດ້ສູນເສຍໄປຫຼັງຈາກການກໍ່ສ້າງເຂື່ອນ. ເມື່ອປະຊາຊົນໄດ້ຮັບຄ່າຊົດເຊີຍ ຫຼື ທົດແທນເປັນເງິນສົດ ສ່ວນໃຫຍ່ກໍ່ແມ່ນໄດ້ຮັບບໍ່ພຽງພໍທີ່ຈະເຮັດໃຫ້ເຂົາເຈົ້າສາມາດດຳລົງຊີວິດຢູ່ໄດ້. ຖ້າວ່າປະຊາຊົນມີຄວາມຄຸ້ນເຄີຍກັບການປູກຝັງ ຫຼື ຊອກຫາອາຫານໃຫ້ແກ່ຕົນເອງ ແລະ ບໍ່ຄຸ້ນເຄີຍກັບການຈັບຈ່າຍເງິນມາກ່ອນ ເຂົາເຈົ້າອາດຈະບໍ່ຮູ້ວ່າຈະນຳໃຊ້ເງິນແນວໃດເພື່ອໃຫ້ກົມໄດ້ດົນ. ສະນັ້ນ, ປະຊາຊົນຄວນຈະໄດ້ຮັບການຊົດເຊີຍ ຫຼື ທົດແທນໃນໄລຍະຍາວຈົນກວ່າເຂົາເຈົ້າຈະຄຸ້ນເຄີຍ ແລະ ປັບຕົວເຂົ້າກັບສະພາບຜົນກະທົບນັ້ນໄດ້ ຫຼື ບໍ່ກໍ່ແມ່ນຕະຫຼອດອາຍຸໂຄງການ.

ໃນລາວ, ຜູ້ສ້າງເຂື່ອນມັກຈະຊຸກຍູ້ໃຫ້ປະຊາຊົນຫັນໄປນຳໃຊ້ວິທີທຳມາຫາກິນແບບໃໝ່ ເປັນຕົ້ນວ່າ ການລ້ຽງສັດຕາມທົ່ງຫຍ້າ, ການລ້ຽງປາໃນໜອງ, ການເຮັດນາແຊງ ຫຼື ການປູກພືດເພື່ອຂາຍໃນຕະຫລາດ. ເພື່ອເຮັດໃຫ້ຊຸມຊົນຍົກຍ້າຍຈັດສັນໃໝ່ສາມາດຫັນປ່ຽນໄປສູ່ການດຳລົງຊີວິດແບບໃໝ່ທີ່ກ່າວມານັ້ນ, ລັດຖະບານ ແລະ ບໍລິສັດສ້າງເຂື່ອນຈຳເປັນຈະຕ້ອງໄດ້ໃຫ້ການຊ່ວຍເຫຼືອແກ່ເຂົາເຈົ້າຫຼາຍສົມຄວນ. ປະຊາຊົນຕ້ອງການຝຶກອົບຮົມວິທີການທຳມາຫາກິນແບບໃໝ່ ແລະ ວິທີການຊອກຫາບ່ອນຂາຍຜົນຜະລິດຂອງເຂົາເຈົ້າ. ແຕ່ສ່ວນຫຼາຍແລ້ວ, ປະຊາຊົນຈະບໍ່ໄດ້ຮັບການຊ່ວຍເຫຼືອຢ່າງພຽງພໍເພື່ອໃຫ້ເຂົາເຈົ້າສາມາດປັບຕົວເຂົ້າກັບສະພາບຊີວິດໃໝ່ຂອງຕົນ ແລະ ສຸດທ້າຍເຂົາເຈົ້າກໍ່ຕົກທຸກໄດ້ຍາກຫຼາຍກວ່າແຕ່ກ່ອນມີການກໍ່ສ້າງເຂື່ອນ.




**ຖ້າບໍ່ມີອາຫານການກິນ ຫຼື ບໍ່ມີເງິນເພື່ອດຳລົງຊີວິດຢູ່ໄດ້, ປະຊາຊົນກໍ່ຈະໄປອາໄສຢູ່ໃນເຂດຊຸມຊົນທຸກຍາກ ຫຼືບໍ່ ກໍ່ກາຍເປັນແຮງງານອົບພະຍົບ.**

## ◈ ປະຊາຊົນບາງຄົນບໍ່ໄດ້ຮັບການຊົດເຊີຍ ຫຼື ທົດແທນຫຍັງເລີຍ

ປະຊາຊົນທີ່ອາໄສຢູ່ໃນເຂດລຸ່ມເຂື່ອນມັກຈະພົບບັນຫາຄວາມຫຍຸ້ງຍາກໃນການສະເໜີໃຫ້ລັດຖະບານຮັບຮູ້ຄວາມເສຍຫາຍຂອງຕົນທີ່ເກີດຈາກເຂື່ອນ. ປະຊາຊົນທີ່ດຳລົງຊີວິດໂດຍອາໄສແມ່ນ້ຳທີ່ໄດ້ຮັບນ້ຳມາຈາກໂຄງການສ້າງເຂື່ອນປ່ຽນແລວນ້ຳກໍ່ພົບບັນຫາຄວາມຫຍຸ້ງຍາກເຊັ່ນດຽວກັນໃນການສະເໜີໃຫ້ລັດຖະບານຮັບຮູ້ຄວາມເສຍຫາຍຂອງເຂົາເຈົ້າ. ຖ້າວ່າທ່ານອາໄສຢູ່ເຂດລຸ່ມເຂື່ອນ ຫຼື ແມ່ນ້ຳທີ່ທ່ານອາໄສເພື່ອການດຳລົງຊີວິດນັ້ນຫາກເປັນສ່ວນໜຶ່ງຂອງໂຄງການສ້າງເຂື່ອນປ່ຽນແລວນ້ຳ, ສິ່ງສຳຄັນທ່ານຄວນເຮັດວຽກຮ່ວມມືກັບປະຊາຊົນຄົນອື່ນໆເພື່ອຮັບປະກັນໃຫ້ໄດ້ຮັບການຊົດເຊີຍຢ່າງພຽງພໍ ແລະ ຍຸຕິທຳຕໍ່ຜົນເສຍຫາຍຈາກເຂື່ອນທີ່ມີຕໍ່ຊັບສິນ ແລະ ການດຳລົງຊີວິດຂອງທ່ານໄປຈົນກວ່າຊີວິດການເປັນຢູ່ຂອງທ່ານຈະກັບຄືນສູ່ສະພາບປົກກະຕິຄືເກົ່າ ເຖິງຈະໃຊ້ເວລາດົນປານໃດກໍ່ຕາມ.

# ທ່ານສາມາດເຮັດຫຍັງໄດ້ແດ່ຖ້າມີການສ້າງເຂື່ອນໃນເຂດພື້ນທີ່ຂອງທ່ານ

ປະຈຸບັນຢູ່ໃນປະເທດລາວມີໂຄງການເຂື່ອນຫຼາຍແຫ່ງທີ່ກຳລັງຢູ່ໃນໄລຍະການກໍ່ສ້າງ. ນອກຈາກນັ້ນກໍ່ຍັງມີຫຼາຍໂຄງການເຂື່ອນທີ່ກຳລັງຢູ່ໃນໄລຍະການວາງແຜນກໍ່ສ້າງໃນອະນາຄົດ. ຖ້າວ່າມີແຜນການກໍ່ສ້າງເຂື່ອນໃນເຂດພື້ນທີ່ຂອງທ່ານ, ສິ່ງສຳຄັນທ່ານຕ້ອງຮູ້ວ່າລັດຖະບານມີນະໂຍບາຍ ແລະ ກົດໝາຍປົກປ້ອງສິດຜົນປະໂຫຍດຂອງທ່ານຄືແນວໃດ. ຖ້າວ່າສິດທິຂອງທ່ານ ແລະ ສິດທິຂອງຊຸມຊົນຫາກຖືກຮັບຮູ້ ແລະ ເຄົາລົບຕາມທີ່ກົດໝາຍ ແລະ ນະໂຍບາຍໄດ້ກຳນົດໄວ້ນັ້ນ ທ່ານເອງ ແລະ ຊຸມຊົນຂອງທ່ານກໍ່ຈະໄດ້ຮັບການຊ່ວຍເຫຼືອ. ຖ້າຫາກວ່າທ່ານ ແລະ ຊຸມຊົນຂອງທ່ານຮ່ວມແຮງຮ່ວມໃຈກັນຫ້າງຫາກະກຽມ ແລະ ສຶກສາໃຫ້ຮູ້ລະບຽບກົດໝາຍ ແລະ ນະໂຍບາຍກ່ຽວກັບເຂື່ອນ ມັນຈະຊ່ວຍເຮັດໃຫ້ສິດທິຂອງທ່ານ ແລະ ຊຸມຊົນໄດ້ຮັບຄວາມເຄົາລົບນັບຖື.



## ◈ ກົດໝາຍ ແລະ ນະໂຍບາຍຂອງລາວກ່ຽວກັບເຂື່ອນ

ລັດຖະບານໄດ້ອອກກົດໝາຍແຫ່ງຊາດວ່າດ້ວຍການກໍ່ສ້າງເຂື່ອນ ແລະ ໂຄງການພັດທະນາອື່ນໆ ແລະ ກົດໝາຍເຫຼົ່ານີ້ລ້ວນແຕ່ແມ່ນໃສ່ເພື່ອ:

- ປ້ອງກັນບໍ່ໃຫ້ເກີດຄວາມເສຍຫາຍ
- ໃຫ້ການຊົດເຊີຍ ຫຼື ທົດແທນແກ່ປະຊາຊົນຜູ້ທີ່ໄດ້ຮັບຜົນເສຍຫາຍ
- ແນະນຳລະອຽດຈະແຈ້ງກ່ຽວກັບລະບຽບການຕ່າງໆສຳລັບການເຄື່ອນຍ້າຍ, ການຍົກຍ້າຍຈັດສັນທີ່ຢູ່ອາໄສ ແລະ ການຊົດເຊີຍແກ່ຜູ້ໄດ້ຮັບຜົນກະທົບ.

ລະບຽບການຕ່າງໆສຳລັບການເຄື່ອນຍ້າຍ, ການຍົກຍ້າຍຈັດສັນທີ່ຢູ່ອາໄສ ແລະ ການຊົດເຊີຍ ແມ່ນໄດ້ລະບຸເປັນລາຍລັກອັກສອນໄວ້ໃນເອກະສານສຳຄັນສາມສະບັບຄືດັ່ງຕໍ່ໄປນີ້:

- ດຳລັດວ່າດ້ວຍການຊົດເຊີຍ ແລະ ການຍົກຍ້າຍຈັດສັນທີ່ຢູ່ອາໄສຂອງໂຄງການພັດທະນາ ສະບັບເລກທີ 129/ນຍ
- ຂໍ້ກຳນົດລະບຽບການເພື່ອຈັດຕັ້ງປະຕິບັດດຳລັດເລກທີ 192/ນຍ
- ຄຳສັ່ງແນະນຳດ້ານວິຊາການກ່ຽວກັບການຊົດເຊີຍ ແລະ ການຍົກຍ້າຍຈັດສັນທີ່ຢູ່ອາໄສໃນໂຄງການພັດທະນາ

ອີງຕາມກົດໝາຍດັ່ງກ່າວ, ກ່ອນເລີ່ມຕົ້ນປະຕິບັດໂຄງການ ເຈົ້າຂອງໂຄງການຕ້ອງປຶກສາຫາລືກັບປະຊາຊົນທຸກຄົນ ແລະ ປະຊາຊົນທຸກຄົນທີ່ໄດ້ຮັບຜົນກະທົບຈາກໂຄງການມີສິດທິໃນການທຳມາຫາກິນເທົ່າທຽມກັນກັບໃນເວລາກ່ອນມີໂຄງການ. ກົດໝາຍຍັງໄດ້ກຳນົດໄວ້ຈະແຈ້ງວ່າທຸກໆຂໍ້ມູນຂ່າວສານກ່ຽວກັບໂຄງການ ແລະ ຜົນກະທົບຈາກໂຄງການຈະຕ້ອງໄດ້ນຳອອກເຜີຍແຜ່ໃຫ້ມວນຊົນຊາບກັນຢ່າງກວ້າງຂວາງ. ຖ້າວ່າທ່ານໄດ້ຮັບຄວາມເສຍຫາຍຍ້ອນໂຄງການ, ທ່ານກໍ່ມີສິດທິຮຽກຮ້ອງເອົາການຊົດເຊີຍຕໍ່ສິ່ງທີ່ທ່ານໄດ້ສູນເສຍໄປນັ້ນຢ່າງເປັນທຳ.

ບົນພື້ນຖານກົດໝາຍດັ່ງກ່າວນີ້, ນັກພັດທະນາ ຫຼື ເຈົ້າຂອງໂຄງການ ກໍ່ຄືບໍລິສັດກໍ່ສ້າງເຂື່ອນຕ້ອງຮັບຜິດຊອບຕໍ່ຜົນເສຍຫາຍທັງໝົດທີ່ອາດຈະເກີດຂຶ້ນຈາກໂຄງການສ້າງເຂື່ອນ ແລະ ຈະຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ ຊຶ່ງໃນນັ້ນລວມທັງຄ່າຊົດເຊີຍແກ່ຜົນເສຍຫາຍຂອງປະຊາຊົນນຳ. ນອກຈາກນັກພັດທະນາ ຫຼື ເຈົ້າຂອງໂຄງການແລ້ວ, ລັດຖະບານລາວກໍ່ຍັງມີພາລະບົດບາດຮັບຜິດຊອບຕໍ່ຜົນເສຍຫາຍນີ້ຄືກັນ. ໃນລາວ, ລັດຖະບານລາວເປັນເຈົ້າຂອງສ່ວນໜຶ່ງຂອງໂຄງການສ້າງເຂື່ອນທຸກໆໂຄງການ. ດັ່ງນັ້ນ, ລັດຖະບານລາວກໍ່ແມ່ນເຈົ້າຂອງໂຄງການຄືກັນ. ດ້ວຍເຫດນີ້, ລັດຖະບານລາວຈະຕ້ອງຮັບປະກັນເຮັດໃຫ້ນັກພັດທະນາ ແລະ ເຈົ້າຂອງໂຄງການທຸກຄົນນັບຖື ແລະ ປະຕິບັດກົດໝາຍລາວຢ່າງເຄັ່ງຄັດ.

## ◈ ປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການແມ່ນໃຜ?

ດຳລັດຂອງລັດຖະບານລາວວ່າດ້ວຍການຊົດເຊີຍ ແລະ ການຍົກຍ້າຍຈັດສັນທີ່ຢູ່ອາໄສຂອງໂຄງການພັດທະນາໄດ້ກຳນົດໄວ້ວ່າ ປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການມີສິດທິທີ່ຈະໄດ້ຮັບການຊົດເຊີຍ ແລະ ການຊ່ວຍເຫຼືອໃນດ້ານການຍົກຍ້າຍຈັດສັນທີ່ຢູ່ອາໄສ ແລະ ການຟື້ນຟູຊີວິດການເປັນຢູ່. ປະຊາຊົນຜູ້ໄດ້ຮັບຜົນກະທົບທີ່ວ່ານີ້ແມ່ນ "ບຸກຄົນທີ່ອາໄສ ແລະ ດຳລົງຊີວິດ" ຢູ່ພາຍໃນເຂດໂຄງການສ້າງເຂື່ອນ ແລະ ປະຊາຊົນທຸກຄົນທີ່ບໍ່ໄດ້ອາໄສຢູ່ໃນເຂດໂຄງການສ້າງເຂື່ອນແຕ່ມີທີ່ດິນ ແລະ ສິ່ງກໍ່ສ້າງຂອງຕົນຢູ່ໃນເຂດໂຄງການສ້າງເຂື່ອນ.



**ປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການແມ່ນປະຊາຊົນທຸກຄົນທີ່ອາໄສຢູ່ໃນເຂດລຸ່ມ ແລະ ເໜືອເຂື່ອນທີ່ໄດ້ຮັບຜົນກະທົບຈາກເຂື່ອນໃນການດຳລົງຊີວິດ.**

ເຂດໂຄງການສ້າງເຂື່ອນບໍ່ແມ່ນສະເພາະແຕ່ເຂດທີ່ຈະໄດ້ຮັບຜົນກະທົບຈາກເຂື່ອນເທົ່ານັ້ນ, ແຕ່ຍັງລວມໄປໄກເຖິງເຂດນ້ຳຕອນລຸ່ມນັບຕັ້ງແຕ່ກ້ອງເຂື່ອນລົງໄປ ຫຼື ລວມເຖິງປະຊາຊົນຜູ້ທີ່ອາໄສແມ່ນ້ຳທີ່ຮັບເອົານ້ຳຈາກ**ໂຄງການອ່າງເຂື່ອນປ່ຽນແລວນ້ຳ** ກໍ່ຖືວ່າເປັນຜູ້ໄດ້ຮັບຜົນກະທົບຈາກໂຄງການຄືກັນ. ຖ້າວ່າທ່ານ ແລະ ຊຸມຊົນຂອງທ່ານຄາດວ່າ ຈະໄດ້ຮັບຜົນກະທົບ ຫຼື ໄດ້ຮັບຜົນກະທົບຈາກເຂື່ອນມາແລ້ວ ທາງທີ່ດີກໍ່ຄວນຮ່ວມແຮງຮ່ວມໃຈກັນກັບປະຊາຊົນຄົນອື່ນໆທີ່ໄດ້ຮັບຜົນກະທົບຈາກເຂື່ອນຄືກັນ ເພື່ອຕໍ່ສູ້ປົກປ້ອງສິດທິຂອງຕົນເອງ ແລະ ເຮັດໃຫ້ສິດທິອັນຊອບທຳຂອງຕົນໄດ້ຮັບການເຄົາລົບນັບຖື.

**ຖ້າວ່າຂ້ອຍເປັນຜູ້ໄດ້ຮັບຜົນກະທົບຈາກໂຄງການ, ຂ້ອຍມີສິດທິແນວໃດແດ່?**

ດຳລັດວ່າດ້ວຍການຍົກຍ້າຍຈັດສັນທີ່ຢູ່ອາໄສໄດ້ປົກປ້ອງສິດທິຫຼາຍດ້ານຂອງປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການສ້າງເຂື່ອນ:

- ແມ່ນແຕ່ກ່ອນທີ່ຈະມີການສ້າງເຂື່ອນ, ປະຊາຊົນຜູ້ທີ່ຈະໄດ້ຮັບຜົນກະທົບມີສິດທິເຂົ້າຮ່ວມໃນການວາງແຜນ.
- ຖ້າວ່າມີການເຄື່ອນຍ້າຍ ແລະ ການຍົກຍ້າຍຈັດສັນທີ່ຢູ່ອາໄສ, ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບມີສິດທິໃນການໄດ້ຮັບການຊົດເຊີຍຢ່າງເປັນທຳ.
- ປະຊາຊົນທີ່ໄດ້ຮັບຜົນກະທົບທຸກຄົນມີສິດທິທີ່ຈະໄດ້ຮັບດິນທີ່ມີຄວາມອຸດົມສົມບູນ ແລະ ການດຳລົງຊີວິດທີ່ດີຄືກັນກັບຕອນທີ່ບໍ່ທັນໄດ້ກໍ່ສ້າງເຂື່ອນ.

ເຖິງວ່າສິດທິເຫຼົ່ານີ້ໄດ້ກຳນົດໄວ້ໃນກົດໝາຍກໍ່ຕາມ ແຕ່ບໍ່ໝາຍຄວາມວ່າສິດທິເຫຼົ່ານີ້ຈະໄດ້ຮັບການເຄົາລົບນັບຖືໂລດ. ສະນັ້ນ, ນັບຕັ້ງແຕ່ກ່ອນການເລີ່ມຕົ້ນໂຄງການເປັນຕົ້ນໄປຈົນຮອດມື້ສຳເລັດໂຄງການ ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈະຕ້ອງສະເໜີເຈົ້າຂອງໂຄງການ ແລະ ພະນັກງານຂອງລັດເພື່ອຮັບປະກັນໃຫ້ຕົນເອງໄດ້ຮັບການປະຕິບັດ ແລະ ການຊົດເຊີຍຢ່າງເປັນທຳຈາກໂຄງການ.

## ◈ ຄວາມຮັບຜິດຊອບຂອງເຈົ້າຂອງໂຄງການມີຫຍັງແດ່?

ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຊົດເຊີຍ ແລະ ການຍົກຍ້າຍຈັດສັນທີ່ຢູ່ອາໄສຂອງໂຄງການພັດທະນາ (ມາດຕາ 4) ໄດ້ລະບຸໄວ້ວ່າເຈົ້າຂອງໂຄງການຕ້ອງ:

- ຫຼີກເວັ້ນການຍົກຍ້າຍປະຊາຊົນ ແລະ ການເຮັດໃຫ້ເກີດຜົນກະທົບອື່ນໆທີ່ເປັນອັນຕະລາຍ
- ເຮັດວຽກປະສົມປະສານກັບອຳນາດການປົກຄອງຂອງລັດ ແລະ ອົງການຈັດຕັ້ງທ້ອງຖິ່ນເພື່ອຊ່ວຍເຫຼືອການຍົກຍ້າຍຈັດສັນທີ່ຢູ່ອາໄສ ແລະ ການຟື້ນຟູການດຳລົງຊີວິດຂອງຊຸມຊົນທີ່ໄດ້ຮັບຜົນກະທົບ ແລະ ໃຫ້ການຊົດເຊີຍແກ່ປະຊາຊົນທຸກຄົນທີ່ໄດ້ຮັບຄວາມເສຍຫາຍ.
- ຈ່າຍຄ່າຍົກຍ້າຍຈັດສັນທີ່ຢູ່ອາໄສ ແລະ ຄ່າຊົດເຊີຍຕໍ່ຜົນເສຍຫາຍຂອງປະຊາຊົນ.
- ເອົາໃຈໃສ່ເບິ່ງແຍງເປັນພິເສດຕໍ່ຄວາມຕ້ອງການຂອງປະຊາຊົນທີ່ເປັນກຸ່ມສ່ຽງຫລາຍທີ່ສຸດ ເຊັ່ນ: ເດັກນ້ອຍ, ແມ່ຍິງ, ຜູ້ເຖົ້າ, ຄົນເສຍອົງຄະ ແລະ ກຸ່ມຊົນເຜົ່າ.
- ຮັບປະກັນການຍົກຍ້າຍຈັດສັນທີ່ຢູ່ອາໄສລວມທັງການມີສ່ວນຮ່ວມຢ່າງຕັ້ງໜ້າຂອງຊຸມຊົນທີ່ໄດ້ຮັບຜົນກະທົບ ແລະ ການປະຕິບັດດັ່ງກ່າວນີ້ຈະຕ້ອງດຳເນີນໄປບົນພື້ນຖານການໃຫ້ຄວາມເຄົາລົບນັບຖືຕໍ່ການຈັດຕັ້ງດ້ານສັງຄົມ ແລະ ວັດທະນະທຳຊຸມຊົນທ້ອງຖິ່ນ.



## ◈ ຄວາມຮັບຜິດຊອບຂອງລັດຖະບານມີຫຍັງແດ່?

ອົງການຈັດຕັ້ງຂອງລັດທີ່ເຮັດໜ້າທີ່ຮັບຜິດຊອບເຂື່ອນ ແລະ ຜົນກະທົບຈາກເຂື່ອນແມ່ນຫ້ອງການຄຸ້ມຄອງຊັບພະຍາກອນແຫຼ່ງນ້ຳ ແລະ ສິ່ງແວດລ້ອມຕັ້ງຢູ່ສຳນັກງານນາຍົກລັດຖະມົນຕີ. ຫ້ອງການຄຸ້ມຄອງຊັບພະຍາກອນແຫຼ່ງນ້ຳ ແລະ ສິ່ງແວດລ້ອມມີໜ້າທີ່ຮັບຜິດຊອບ ແລະ ຮັບປະກັນເຮັດໃຫ້ເຈົ້າຂອງໂຄງການປະຕິບັດລະບຽບກົດໝາຍຢ່າງເຄັ່ງຄັດ ຊຶ່ງໃນນັ້ນກໍ່ແມ່ນເຮັດໜ້າທີ່ :

- ແລກປ່ຽນຂໍ້ມູນຂ່າວສານກ່ຽວກັບກົດໝາຍ ແລະ ນະໂຍບາຍຕ່າງໆຂອງລັດຖະບານ.
- ອະນຸມັດ ຫຼື ປະຕິເສດໂຄງການໂດຍອີງໃສ່ບົດລາຍງານຂອງເຈົ້າຂອງໂຄງການ.
- ຕິດຕາມກວດກາການຍົກຍ້າຍຈັດສັນທີ່ຢູ່ອາໄສຂອງຜູ້ໄດ້ຮັບຜົນກະທົບຈາກໂຄງການດ້ວຍຄວາມເປັນທຳ
- ໃຫ້ການແນະນຳດ້ານເຕັກນິກວິຊາການແກ່ເຈົ້າຂອງໂຄງການ ແລະ ອົງການຈັດຕັ້ງອື່ນໆທີ່ກ່ຽວຂ້ອງ

**ນອກນັ້ນ, ພະນັກງານທ້ອງຖິ່ນກໍ່ຍັງມີໜ້າທີ່ຮັບຜິດຊອບ:**

- ແລກປ່ຽນ ແລະ ເຜີຍແຜ່ຂໍ້ມູນກ່ຽວກັບໂຄງການ ແລະ ຜົນກະທົບຈາກໂຄງການ
- ຊ່ວຍເຫຼືອຊາວບ້ານໃນການສຳຫຼວດກວດກາຊັບສິນ ແລະ ຜົນເສຍຫາຍທີ່ມີຕໍ່ຊັບສິນຂອງເຂົາເຈົ້າ
- ຊ່ວຍເຫຼືອຊາວບ້ານປະເມີນມູນຄ່າຊັບສິນທີ່ໄດ້ຮັບຄວາມເສຍຫາຍຈາກເຂື່ອນເພື່ອໃຫ້ເຂົາເຈົ້າໄດ້ຮັບການຊົດເຊີຍຢ່າງພຽງພໍ ແລະ ເປັນທຳ.
- ເຮັດວຽກຮ່ວມກັບເຈົ້າຂອງໂຄງການເພື່ອແກ້ໄຂບັນຫາຄຳຮ້ອງທຸກຂອງປະຊາຊົນຜູ້ໄດ້ຮັບຜົນກະທົບ.



ເຈົ້າຂອງໂຄງການ, ພະນັກງານລັດ, ອຳນາດການປົກຄອງທ້ອງຖິ່ນ ແລະ ຊາວບ້ານທຸກຝ່າຍຕ່າງກໍ່ມີໜ້າທີ່ຮັບຜິດຊອບຮ່ວມກັນເພື່ອຮັບປະກັນເຮັດໃຫ້ປະຊາຊົນທຸກຄົນທີ່ໄດ້ຮັບຜົນກະທົບຈາກໂຄງການໄດ້ຮັບການຊົດເຊີຍຕໍ່ຜົນເສຍຫາຍຂອງເຂົາເຈົ້າດ້ວຍຄວາມເປັນທຳ.

**ເພື່ອຕິດຕໍ່ພົວພັນກັບຫ້ອງການຄຸ້ມຄອງຊັບພະຍາກອນແຫຼ່ງນ້ຳ ແລະ ສິ່ງແວດລ້ອມໃນນະຄອນຫຼວງວຽງຈັນ ໃຫ້ເບິ່ງເລກໂທລະສັບຕິດຕໍ່ໃນໜ້າສຸດທ້າຍຂອງປຶ້ມຄູ່ມືແນະນຳເຫຼັ້ມນີ້.**

## ◈ ການເຄື່ອນໄຫວຕ່າງໆທີ່ຊຸມຊົນສາມາດປະຕິບັດຮ່ວມກັນໄດ້

ເນື່ອງຈາກວ່າເຂື່ອນຂະໜາດໃຫຍ່ມີຜົນກະທົບຕໍ່ໝົດທຸກຄົນໃນຊຸມຊົນ. ສະນັ້ນ, ສິ່ງສຳຄັນທີ່ສຸດກໍ່ຄື ທ່ານຕ້ອງເຮັດວຽກຮ່ວມມືກັນກັບປະຊາຊົນທຸກຄົນໃນຊຸມຊົນຂອງທ່ານເພື່ອປົກປ້ອງສິດທິ, ຜົນປະໂຫຍດ ແລະ ຊັບພະຍາກອນສ່ວນລວມຂອງຊຸມຊົນ. ເພື່ອຮັບປະກັນໃຫ້ຕົນເອງໄດ້ຮັບການປະຕິບັດຕອບ ແລະ ໄດ້ຮັບການຊົດເຊີຍຢ່າງເປັນທຳນັ້ນ, ປະຊາຊົນໃນບ້ານສາມາດເຮັດວຽກຮ່ວມກັນໄດ້ດ້ວຍຫຼາຍວິທີທາງທີ່ມີຄວາມປອດໄພ ແລະ ທັງຖືກຕ້ອງຕາມກົດໝາຍອີກດ້ວຍ.

ບາງວຽກງານການເຄື່ອນໄຫວທີ່ຊຸມຊົນສາມາດເຮັດໄດ້ນັ້ນອາດຂຶ້ນກັບວ່າອຳນາດການປົກຄອງບ້ານໃຫ້ການສະໜັບສະໜູນ ແລະ ເຫັນດີເຫັນພ້ອມນຳວິທີການນັ້ນ ຫຼື ບໍ່. ບາງທີບ້ານອາດຈະມີການນຳພາດີ, ແຕ່ວິທີການເຄື່ອນໄຫວບາງຢ່າງນັ້ນ ບ້ານອາດຈະບໍ່ໃຫ້ການສະໜັບສະໜູນ ເພາະວ່າບ້ານອາດຈະໄດ້ຂໍຄຳເຫັນ ແລະ ຂໍອະນຸມັດຈາກອຳນາດການປົກຄອງໃນລະດັບສູງກວ່າ.

ສະນັ້ນ, ຈຸດເລີ່ມຕົ້ນຂອງຊຸມຊົນທີ່ຕ້ອງປະຕິບັດກໍ່ຄືເຮັດໃຫ້ທຸກຄົນທີ່ໄດ້ຮັບຜົນກະທົບນັ້ນເຂົ້າໃຈໄດ້ວ່າເຂົາເຈົ້າກຳລັງປະສົບບັນຫາຫຍັງ. ເວົ້າແນວນີ້ກໍ່ໝາຍຄວາມວ່າ ຊຸມຊົນຈະຕ້ອງຖາມລັດຖະບານ ຫຼື ນັກພັດທະນາໂຄງການເພື່ອໃຫ້ຮູ້ຂໍ້ມູນກ່ຽວກັບຜົນກະທົບທີ່ຊາວບ້ານອາດຈະໄດ້ຮັບຈາກໂຄງການສ້າງເຂື່ອນ ແລະ ຖາມເຖິງການຍົກຍ້າຍປະຊາຊົນທີ່ທາງໂຄງການສ້າງເຂື່ອນໄດ້ສະເໜີ. ຈາກນັ້ນແລ້ວ ກໍ່ແລກປ່ຽນ ແລະ ເຜີຍແຜ່ຂໍ້ມູນທີ່ໄດ້ມາໃຫ້ໝົດທຸກຄົນໃນຊຸມຊົນຮູ້ ແລະ ເຂົ້າໃຈຢ່າງທົ່ວເຖິງ. ອົງການພັດທະນາ, ອົງການຈັດຕັ້ງທີ່ບໍ່ແມ່ນຂອງລັດຖະບານ ພ້ອມດ້ວຍປະຊາຊົນຈາກບ້ານ ຫຼື ຊຸມຊົນອື່ນທີ່ປະສົບບັນຫາຈາກໂຄງການສ້າງເຂື່ອນທັງໝົດສາມາດແລກປ່ຽນຂໍ້ມູນຂ່າວສານກ່ຽວກັບເຂື່ອນ ແລະ ຜົນກະທົບຈາກເຂື່ອນ, ແລະ ພ້ອມໃຈກັນຊອກຫາວິທີທາງອັນເໝາະສົມເພື່ອປົກປ້ອງສິດທິ ແລະ ປົກປັກຮັກສາຊັບພະຍາກອນຂອງຕົນເອງ ແລະ ຊຸມຊົນ.




| | |
|---|---|
| ➢ ຖ້າວ່າທ່ານສູນເສຍເຮືອນ | ➢ ທ່ານຈະຕ້ອງໄດ້ຮັບການທົດແທນດ້ວຍເຮືອນ |
| ➢ ຖ້າວ່າທ່ານສູນເສຍຜົນລະປູກ | ➢ ທ່ານຈະຕ້ອງໄດ້ຮັບການທົດແທນດ້ວຍເງິນສົດ |
| ➢ ຖ້າວ່າທ່ານສູນເສຍການງານ ຫຼື ທຸລະກິດຂອງຕົນ | ➢ ທ່ານຈະຕ້ອງໄດ້ຮັບການຊ່ວຍເຫຼືອໃຫ້ໄດ້ເລີ່ມການງານ ຫຼື ທຸລະກິດນັ້ນຄືນ |

**ການສຶກສາຊຸມຊົນສາມາດຊ່ວຍທ່ານປົກປ້ອງສິດທິຂອງທ່ານໄດ້!**

## ◈ ເອກະສານອ້າງອີງດ້ານກົດໝາຍ

ກົດໝາຍວ່າດ້ວຍການຮ້ອງທຸກ ຊຶ່ງເອີ້ນວ່າ "ກົດໝາຍວ່າດ້ວຍການດຳເນີນການຮ້ອງທຸກ" ໄດ້ອະນຸຍາດໃຫ້ປະຊາຊົນສະເໜີຄວາມຄິດເຫັນຂອງຕົນຕໍ່ລັດຖະບານ ແລະ ໄດ້ສະໜັບສະໜູນໃຫ້ສິດແກ່ຊຸມຊົນໃນການດຳເນີນການຕ່າງໆເພື່ອຮຽກຮ້ອງເອົາຄວາມເປັນທຳມາໃຫ້ແກ່ຕົນເອງ. ເພື່ອຢາກສຶກສາໃຫ້ຮູ້ວ່າກົດໝາຍສະບັບນີ້ສາມາດສະໜັບສະໜູນຊຸມຊົນເພື່ອຮຽກຮ້ອງເອົາຄວາມເປັນທຳໃຫ້ຕົນເອງໄດ້ແນວໃດແດ່ນັ້ນທ່ານສາມາດຕິດຕໍ່ພົວພັນເອົາກົດໝາຍວ່າດ້ວຍການດຳເນີນການຮ້ອງທຸກສະບັບພາສາລາວໄດ້ຈາກ:

- ອົງການຕົວແທນທາງດ້ານກົດໝາຍທີ່ຫ້ອງການໃຫ້ຄຳປຶກສາດ້ານກົດໝາຍ ຫຼື ຫ້ອງການໃຫ້ຄຳປຶກສາດ້ານກົດໝາຍພາກເອກະຊົນ
- ສະພາທະນາຍຄວາມ (ມີຢູ່ຂັ້ນສູນກາງ ຫຼື ຫ້ອງການສະພາທະນາຍຄວາມປະຈຳຢູ່ທຸກໆແຂວງ)
- ຜູ້ແທນສະພາປະຊາຊົນປະຈຳຢູ່ແຕ່ລະທ້ອງຖິ່ນ
- ຫ້ອງການສະພາແຫ່ງຊາດຢູ່ໃນແຂວງຂອງທ່ານ
- ອົງການໄອຍະການສານ
- ອົງການຈັດຕັ້ງສາກົນ ແລະ ທ້ອງຖິ່ນທີ່ໃຫ້ການສົ່ງເສີມການພັດທະນາ

**ກົດໝາຍວ່າດ້ວຍການດຳເນີນການຮ້ອງທຸກໄດ້ລະບຸໄວ້ວ່າ ກົດໝາຍອື່ນໆຈະຕ້ອງໃຫ້ການປົກປ້ອງປະຊາຊົນຜູ້ທີ່ຮຽກຮ້ອງຂໍຄວາມເປັນທຳຈາກລັດຖະບານ ຫຼື ຈາກນັກພັດທະນາໂຄງການ.**

## ◈ ການຂໍອະນຸຍາດຈົດທະບຽນເພື່ອຈັດຕັ້ງກຸ່ມ

ຊຸມຊົນສາມາດຂໍອະນຸຍາດຈົດທະບຽນເພື່ອຈັດຕັ້ງສະມາຄົມ ຫຼື ກຸ່ມຜູ້ຜະລິດຕ່າງໆ ເຊັ່ນ ສະມາຄົມ ຫຼື ກຸ່ມຊາວປະມົງ, ກຸ່ມຊາວນາ ຫຼື ກຸ່ມອື່ນໆ ຢ່າງຖືກຕ້ອງຕາມກົດໝາຍໄດ້ຈາກທະບວງການປົກຄອງ. ການຈົດທະບຽນເພື່ອຈັດຕັ້ງກຸ່ມ ຫຼື ສ້າງຕັ້ງສະມາຄົມຢ່າງຖືກຕ້ອງຕາມກົດໝາຍນັ້ນເຮັດໃຫ້ລັດຖະບານຮັບຮູ້ການເຄື່ອນໄຫວວຽກງານລວມໝູ່ຂອງກຸ່ມ ຫຼື ຂອງສະມາຄົມ. ກຸ່ມ ຫຼື ສະມາຄົມຕ່າງໆສາມາດຂໍອະນຸຍາດຈັດຕັ້ງຂຶ້ນໄດ້ໃນຂັ້ນບ້ານ ແລະຂັ້ນເມືອງ.

ກຸ່ມຊຸມຊົນສາມາດຕາງໜ້າໃຫ້ແກ່ຊຸມຊົນສະເໜີຂໍ້ຄິດເຫັນ, ຄວາມຕ້ອງການ ແລະ ຜົນປະໂຫຍດລວມຂອງຊຸມຊົນໃນເວລາເຈລະຈາກັບລັດຖະບານ ຫຼື ພະນັກງານໂຄງການ. ກຸ່ມຊຸມຊົນນີ້ສາມາດໃຫ້ການສຶກສາແກ່ຊຸມຊົນ ແລະ ສາມາດຊ່ວຍຈັດຕັ້ງວຽກງານສຳຫຼວດຊຸມຊົນ (ເບິ່ງໜ້າ 28), ແລະ ສາມາດເຂົ້າຮ່ວມການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (ເບິ່ງໜ້າ 26), ແລະ ທັງສາມາດຊ່ວຍເຮັດໃຫ້ວຽກງານຟື້ນຟູການດຳລົງຊີວິດຂອງປະຊາຊົນຕອບສະໜອງຕໍ່ຄວາມຕ້ອງການຂອງປະຊາຊົນໄດ້ (ເບິ່ງໜ້າ 35).

ເນື່ອງຈາກວ່າຂັ້ນຕອນການຈົດທະບຽນສ້າງຕັ້ງກຸ່ມ ຫຼື ສະມາຄົມຕ່າງໆນຳທະບວງການປົກຄອງນັ້ນຍັງຢູ່ໃນໄລຍະລິເລີ່ມໃໝ່ຄືເລີ່ມແຕ່ປີ 2009 ເປັນຕົ້ນມາໂດຍອີງໃສ່ດຳລັດນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງສະມາຄົມ. ສະນັ້ນ, ລະບຽບການ ແລະ ຂັ້ນຕອນການຈົດທະບຽນສ້າງຕັ້ງສະມາຄົມ ຫຼື ກຸ່ມຕ່າງໆນັ້ນຈຶ່ງຍັງບໍ່ຈະແຈ້ງ ແລະ ຊັດເຈນດີ. ເຖິງຢ່າງໃດກໍ່ຕາມ, ທ່ານສາມາດສະເໜີຂໍອະນຸຍາດຈົດທະບຽນສ້າງຕັ້ງກຸ່ມ ຫຼື ສະມາຄົມນຳຫ້ອງການສູນກາງແນວລາວສ້າງຊາດ ແລະ ຫ້ອງການຄຸ້ມຄອງຊັບພະຍາກອນແຫຼ່ງນ້ຳ ແລະ ສິ່ງແວດລ້ອມໃນແຂວງຂອງຕົນເອງໄດ້ ຫຼື ທ່ານອາດສະເໜີຂໍຈົດທະບຽນສ້າງຕັ້ງກຸ່ມ ຫຼື ສະໂມສອນນຳເມືອງຂອງຕົນເອງໄດ້. ກຸ່ມ ຫຼື ສະໂມສອນນີ້ແມ່ນລວມເຖິງກຸ່ມ ຫຼື ສະໂມສອນປົກປັກຮັກສາສິ່ງແວດລ້ອມຂອງບ້ານ ແລະ ຂອງເດັກນ້ອຍໃນບ້ານ.

**ເພື່ອຢາກຮູ້ຂໍ້ມູນເພີ່ມເຕີມກ່ຽວກັບການສ້າງຕັ້ງສະມາຄົມ ທ່ານສາມາດຕິດຕໍ່ພົວພັນກັບເຄືອຂ່າຍສະມາຄົມຊ່ວຍເຫຼືອສັງຄົມ (ເບິ່ງບ່ອນຕິດຕໍ່ພົວພັນໄດ້ໃນ ໜ້າທີ 38).**

## ◈ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ

ດຳລັດນາຍົກລັດຖະມົນຕີສະບັບເລກທີ 112/ນຍ ວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມໄດ້ກຳນົດໄວ້ວ່າກ່ອນເລີ່ມຕົ້ນໂຄງການກໍ່ສ້າງເຂື່ອນເຈົ້າຂອງໂຄງການຕ້ອງເຮັດການປະເມີນຜົນກະທົບຕໍ່ສິ່ງແວດລ້ອມກ່ອນ. ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແມ່ນການສຶກສາໃຫ້ຮູ້ວ່າໂຄງການຈະມີຜົນກະທົບບໍ່ດີຫຍັງແດ່ຕໍ່ປະຊາຊົນ, ສັດ, ດິນ, ນ້ຳ ແລະ ອາກາດໃນເຂດທີ່ຈະກໍ່ສ້າງໂຄງການນັ້ນ. ຈຸດປະສົງຂອງການປະເມີນຜົນກະທົບແມ່ນເພື່ອບອກໃຫ້ຮູ້ວ່າໂຄງການຈະກໍ່ໃຫ້ເກີດຄວາມເສຍຫາຍຫຍັງແດ່ ແລະ ສາມາດແກ້ໄຂໄດ້ຄືແນວໃດ.

ນອກຈາກນັ້ນ, ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມຍັງສຶກສາໃຫ້ຮູ້ວ່າໂຄງການຈະສ້າງບັນຫາຫຍັງແດ່ໃຫ້ແກ່ສັງຄົມເຊັ່ນບັນຫາການຍົກຍ້າຍປະຊາຊົນ ແລະ ຄວາມເສຍຫາຍທີ່ຈະເກີດຂຶ້ນກັບພື້ນທີ່ທຳມາຫາກິນຂອງທ້ອງຖິ່ນ ແລະ ສະຖານທີ່ປະຫວັດສາດ ຫຼື ສະຖານທີ່ສັກກາລະບູຊາສຳຄັນຕ່າງໆຂອງຊຸມຊົນ.

ຖ້າຫາກການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສະແດງໃຫ້ເຫັນວ່າບໍ່ມີວິທີໃດຈະເຮັດໂຄງການໄດ້ ຖ້າເຮັດໄປກໍ່ຈະເກີດຄວາມເສຍຫາຍຢ່າງໃຫຍ່ຫລວງ. ສະນັ້ນ, ກົດໝາຍຂອງລາວຈຶ່ງລະບຸໄວ້ວ່າໂຄງການຈະຕ້ອງຊອກຫາທາງເລືອກອື່ນທີ່ເໝາະສົມກວ່າ.

**ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມປະກອບດ້ວຍໜ້າວຽກຕົ້ນຕໍ 2 ຢ່າງຄື:**

1. ການສຶກສາຜົນກະທົບຕໍ່ໂຄງການທີ່ຈະມີໃນອະນາຄົດ ແລະ ບົດລາຍງານທີ່ອະທິບາຍກ່ຽວກັບຜົນກະທົບເຫຼົ່ານີ້.
2. ການຈັດຕັ້ງກອງປະຊຸມເປີດກວ້າງມວນຊົນເພື່ອໃຫ້ປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການເຂົ້າຮ່ວມສະແດງຄວາມຄິດເຫັນກ່ຽວກັບບັນຫາຂອງເຂົາເຈົ້າ ແລະ ເພື່ອຮັບປະກັນໃຫ້ທຸກຄົນຮັບຮູ້ວ່າການປະເມີນຜົນກະທົບຕໍ່ສິ່ງແວດລ້ອມທີ່ໄດ້ດຳເນີນໄປນັ້ນມີຄວາມລະອຽດ, ຄົບຖ້ວນ ແລະ ຖືກຕ້ອງຕາມຂັ້ນຕອນທຸກປະການ.

**ມາດຕາ** 7: ຂອງດຳລັດສະບັບນີ້ຍັງໄດ້ລະບຸໄວ້ວ່າ ປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການມີສິດເຂົ້າຮ່ວມປຶກສາຫາລືກ່ຽວກັບການຊົດເຊີຍ, ການຍົກຍ້າຍຈັດສັນທີ່ຢູ່ອາໄສ ແລະ ການປ່ຽນແປງຊີວິດການເປັນຢູ່ຂອງຕົນເອງ.



## ◈ ຄໍາຖາມທີ່ຄວນຖາມໃນກອງປະຊຸມເປີດກວ້າງມວນຊົນ

ອີງຕາມກົດໝາຍລາວ, ຂະນະທີ່ມີການປະເມີນຜົນກະທົບຕໍ່ສິ່ງແວດລ້ອມນັ້ນ ເຈົ້າຂອງໂຄງການຕ້ອງເປີດກອງປະຊຸມຂຶ້ນກັບຊຸມຊົນທີ່ໄດ້ຮັບຜົນກະທົບເພື່ອເຜີຍແຜ່ຂໍ້ມູນກ່ຽວກັບເຂື່ອນ ແລະ ຕ້ອງອະນຸຍາດໃຫ້ປະຊາຊົນຊັກຖາມບັນຫາຂໍ້ຂ້ອງໃຈຂອງເຂົາເຈົ້າ. ສະນັ້ນ, ມັນເປັນໂອກາດດີສໍາລັບຊຸມຊົນ ແລະ ປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການຕ້ອງເຂົ້າຮ່ວມກອງປະຊຸມດັ່ງກ່າວນີ້. ເວລາທ່ານເຂົ້າຮ່ວມກອງປະຊຸມທ່ານຈະມີໂອກາດຖາມບັນຫາຂໍ້ຂ້ອງໃຈຕ່າງໆທີ່ທ່ານ ແລະ ຊຸມຊົນຂອງທ່ານມີ ແລະ ທັງຍັງເຮັດໃຫ້ທ່ານຮູ້ກ່ຽວກັບບັນຫາຂອງໂຄງການດີຂຶ້ນ. ຄໍາຖາມສໍາຄັນຕົ້ນຕໍທີ່ທ່ານຄວນຖາມໃນກອງປະຊຸມມີດັ່ງຕໍ່ໄປນີ້:



## ✱ ການສຳຫຼວດພື້ນທີ່ໂດຍຊຸມຊົນເອງ

ການສຳຫຼວດພື້ນທີ່ໂດຍຊຸມຊົນເອງນີ້ມີຄວາມໝາຍສຳຄັນເພາະວ່າມັນຊ່ວຍເກັບກຳ ແລະ ບັກທຶກຂໍ້ມູນກ່ຽວກັບຊັບພະຍາກອນຕ່າງໆທີ່ທ່ານໄດ້ສ້າງສາ, ນຳໃຊ້, ໃຊ້ແນວໃດ, ເພື່ອຫຍັງ ແລະ ຄຸນຄ່າຂອງຊັບພະຍາກອນເຫຼົ່ານັ້ນມີຕໍ່ຊີວິດຂອງທ່ານຄືແນວໃດກ່ອນການກໍ່ສ້າງເຂື່ອນ. ຜົນການສຳຫຼວດນີ້ຈະເປັນສິ່ງພິສູດ ແລະ ຢັ້ງຢືນເພື່ອໃຫ້ທ່ານໄດ້ຮັບການຊົດເຊີຍຢ່າງເໝາະສົມ ແລະ ເປັນທຳຈາກໂຄງການ. ສະນັ້ນ, ຈຳເປັນຕ້ອງເກັບກຳຂໍ້ມູນຕ່າງໆກ່ຽວກັບການຫາປາ, ຮົ້ວສວນພືດຜັກ, ເຄື່ອງປ່າຂອງດົງຈາກປ່າໄມ້, ຕົ້ນໄມ້ທີ່ເປັນຢາ ແລະ ພືດພັນທັນຍາຫານຕ່າງໆທີ່ເກີດຕາມແຄມນ້ຳທີ່ທ່ານເຄີຍເກັບມາກິນເປັນອາຫານປະຈຳວັນ. ຂໍ້ມູນຕ່າງໆເຫຼົ່ານີ້ສາມາດນຳມາພິສູດ ແລະ ຢັ້ງຢືນໃຫ້ເຫັນວ່າແມ່ນ້ຳລຳເຊ ແລະ ປ່າໄມ້ໃນເຂດພື້ນທີ່ຂອງທ່ານມີຄວາມສຳຄັນຕໍ່ຊີວິດ ແລະ ການດຳລົງຊີວິດຂອງທ່ານ. ຂໍ້ມູນເຫຼົ່ານີ້ຍິ່ງມີປະໂຫຍດຫຼາຍໂດຍສະເພາະໃນເວລາບໍ່ມີເອກະສານບັນທຶກຊັບສິນເປັນລາຍລັກອັກສອນໄວ້. ນອກຈາກນັ້ນ, ຂໍ້ມູນເຫຼົ່ານີ້ກໍ່ຍັງມີປະໂຫຍດໃນເວລາທີ່ດິນ ແລະ ຊັບພະຍາກອນອື່ນໆເປັນຂອງສ່ວນລວມ ຫຼື ເປັນຊັບພະຍາກອນຂອງຊຸມຊົນ.

## ✱ ຈະເຮັດການສຳຫຼວດພື້ນທີ່ດ້ວຍຕົນເອງແນວໃດ

**<u>ບາດກ້າວທີ</u>** 1: ຈັດຕັ້ງກອງປະຊຸມປຶກສາຫາລືກັບໝົດທຸກຄົນທີ່ສົນໃຈເຂົ້າຮ່ວມການສຳຫຼວດ ແລະ ພ້ອມກັນນັ້ນກໍ່ໃຫ້ເຊື້ອເຊີນເອົາຊາວບ້ານຈາກບ້ານທີ່ໄດ້ຮັບຜົນກະທົບຄືກັນເຂົ້າຮ່ວມນຳຫຼາຍຄົນເທົ່າໃດຍິ່ງດີ. ໃຫ້ຍົກບັນຫາແມ່ນ້ຳ, ປ່າໄມ້, ຫ້ວຍໜອງຄອງບຶງ ຕະຫຼອດຮອດພື້ນທີ່ດິນທາມຕ່າງໆທີ່ມີຄວາມສຳຄັນ ແລະ ຈຳເປັນຕໍ່ການດຳລົງຊີວິດຂອງທ່ານຂຶ້ນມາປຶກສາຫາລືກັນ ແລະ ສຸດທ້າຍກໍ່ໃຫ້ຕົກລົງເປັນເອກະພາບກັນວ່າຈະສຳຫຼວດອັນໃດແດ່.

**<u>ບາດກ້າວທີ</u>** 2: ໃຫ້ແບ່ງກັນອອກເປັນກຸ່ມເພື່ອເຮັດການສຳຫຼວດສິ່ງທີ່ໄດ້ຕົກລົງກັນໃນກອງປະຊຸມນັ້ນ. ໃນກຸ່ມສຳຫຼວດນີ້ຄວນໃຫ້ມີຄົນຜູ້ທີ່ຮູ້ຈັກສະພາບພື້ນທີ່ໆຈະສຳຫຼວດນັ້ນດີ ແລະ ຢ່າລືມໃຫ້ເອົາແມ່ຍິງເຂົ້າມາຮ່ວມໃນກຸ່ມສຳຫຼວດນຳ. ຕົວຢ່າງວ່າຜູ້ໃດຮູ້ຈັກ ແລະ ຊຳນານກ່ຽວກັບການຫາປາກໍ່ຄວນໃຫ້ໄປສຳຫຼວດກ່ຽວກັບປາ ແລະ ເຂດຫາປາ, ຫຼື ຊາວສວນກໍ່ຄວນໃຫ້ສຳຫຼວດກ່ຽວກັບສວນຕາມແຄມແມ່ນ້ຳ ດັ່ງນີ້ເປັນຕົ້ນ.

**<u>ບາດກ້າວທີ</u>** 3: ໃຫ້ຕັດສິນໃຈ ແລະ ຕົກລົງກັນວ່າຈະເຮັດການສຳຫຼວດດ້ວຍວິທີໃດ. ຂໍ້ແນະນຳບາງຢ່າງເພື່ອເປັນແນວຄວາມຄິດໃຫ້ແກ່ພວກທ່ານເພື່ອເຮັດການສຳຫຼວດມີຄືດັ່ງນີ້:

**<u>ສຳຫຼວດກ່ຽວກັບການປະມົງ:</u>** ໃຫ້ຈັດແບ່ງແມ່ນ້ຳ, ຫ້ວຍໜອງຄອງບຶງ ແລະ ພື້ນທີ່ດິນທາມອອກເປັນເຂດ. ຈາກນັ້ນກໍ່ມອບໝາຍໃຫ້ກຸ່ມຄົນຫາປາໄປສຳຫຼວດບ່ອນຫາປາ ແລະ ປາໃນແຕ່ລະເຂດ. ການສຳຫຼວດນີ້ແມ່ນໃຫ້ຈັດແຈງເອົາເຄື່ອງມືຫາປາລົງໄປຫາປາຕົວຈິງໃນແຕ່ລະເຂດທີ່ກ່າວມານັ້ນ. ໃນແຕ່ລະເຂດ ຫຼື ວັງນ້ຳນັ້ນ ກຸ່ມສາມາດຫາປາໄດ້ຈັກໂຕ, ຈັກຊະນິດ, ລວມນ້ຳໜັກເທົ່າໃດ ແລະ ໃຊ້ເວລາຫາດົນປານໃດຈຶ່ງໄດ້ປາໃນຈຳນວນເທົ່ານັ້ນ. ທັງໝົດນີ້ແມ່ນໃຫ້ກຸ່ມຫາປາຈົດບັນທຶກໄວ້ຄັກແນ່. ຖ້າຂາຍປາກໍ່ໃຫ້ຈົດ ແລະ ບັນທຶກຈຳນວນເງິນທີ່ໄດ້ຈາກການຂາຍປານັ້ນໄວ້. ຍ້ອນວ່າການຫາປາໃນແຕ່ລະດູການນັ້ນໄດ້ໜ້ອຍຫຼາຍບໍ່ຄືກັນ. ສະນັ້ນ, ຈຶ່ງຈຳເປັນຕ້ອງເຮັດການສຳຫຼວດໃນແຕ່ລະລະດູຫາປາໃນຮອບປີໜຶ່ງ ແລະ ບັນທຶກໄວ້ຄັກແນ່.

**<u>ການສຳຫຼວດສວນແຄມນ້ຳ:</u>** ໃຫ້ຈັດແບ່ງແມ່ນ້ຳອອກເປັນເຂດ. ຈາກນັ້ນກໍ່ໃຫ້ກຸ່ມສຳຫຼວດຍ່າງເລາະລຽບຕາມແຄມນ້ຳແຕ່ລະເຂດ, ໃຫ້ວັດແທກ ແລະ ບັນທຶກເອົາເນື້ອທີ່ສວນແຄມນ້ຳແຕ່ລະຕອນ, ປະເພດເຄື່ອງປູກຂອງຝັງໃນສວນແຕ່ລະແຫ່ງພ້ອມດ້ວຍຊື່ເຈົ້າຂອງສວນ ແລະ ການນຳໃຊ້ຜົນຜະລິດຈາກສວນ (ເອົາໄວ້ກິນ, ຂາຍ, ແລກປ່ຽນ ຫຼື ແບ່ງປັນກັນກິນບໍ?). ຖ້າວ່ານຳໄປຂາຍຢູ່ຕະຫລາດກໍ່ໃຫ້ບັນທຶກຈຳນວນເງິນທີ່ຂາຍໄດ້ມານັ້ນຫຼາຍປານໃດ. ພ້ອມກັນນັ້ນກໍ່ໃຫ້ບັນທຶກວ່າເຈົ້າຂອງສວນແຄມນ້ຳແຕ່ລະຕອນນັ້ນໃນຮອບໜຶ່ງປີໄດ້ປູກຫຍັງແດ່ ແລະ ປູກຈັກເທື່ອ.

**<u>ການສຳຫຼວດປ່າໄມ້</u>:** ໃຫ້ຈັດແບ່ງປ່າໄມ້ອອກເປັນເຂດ. ໃນແຕ່ລະເຂດໃຫ້ຈົດບັນທຶກເອົາຊະນິດໄມ້ຕ່າງໆ ແລະ ຊະນິດເຄື່ອງປ່າຂອງດົງໃນປ່າໄມ້ແຕ່ລະເຂດວ່າມີຫຍັງແດ່. ໃນແຕ່ລະເດືອນ ຊາວບ້ານໄດ້ນຳໃຊ້ໄມ້ ແລະ ເກັບເຄື່ອງປ່າຂອງດົງຊະນິດຕ່າງໆໃນແຕ່ລະເຂດໄດ້ຫຼາຍປານໃດ ແລະ ເອົາໄປໃຊ້ເຮັດຫຍັງ. ຖ້າເອົາໄປຂາຍກໍ່ໃຫ້ບັນທຶກຈຳນວນເງິນທີ່ແຕ່ລະຄົນຂາຍໄດ້ຫຼາຍປານໃດໃນແຕ່ລະເດືອນ.



## ◈ ສິດທິຂອງທ່ານທີ່ຈະໄດ້ຮັບການຊົດເຊີຍ ແລະ ການຍົກຍ້າຍຈັດສັນທີ່ຢູ່ອາໄສຢ່າງເປັນທຳ

ດຳລັດນາຍົກລັດຖະມົນຕີວ່າດ້ວຍການຊົດເຊີຍ ແລະ ການຍົກຍ້າຍຈັດສັນທີ່ຢູ່ອາໄສຈາກໂຄງການພັດທະນາ ແລະ ຂໍ້ກຳນົດກ່ຽວກັບການຈັດຕັ້ງປະຕິບັດດຳລັດເລກທີ 192/ນຍ, ໄດ້ປົກປ້ອງສິດທິຂອງປະຊາຊົນຜູ້ທີ່ຈະຖືກຍົກຍ້າຍຈັດສັນທີ່ຢູ່ອາໄສໃໝ່. ອີງຕາມດຳລັດ ແລະ ຂໍ້ກຳນົດດັ່ງກ່າວ, ເຈົ້າຂອງໂຄງການຕ້ອງຊົດເຊີຍແກ່ປະຊາຊົນທຸກຄົນທີ່ໄດ້ຮັບຜົນກະທົບ ແລະ ສູນເສຍຊັບສິນຂອງຕົນເອງຍ້ອນໂຄງການ ເຊັ່ນ: ການຊົດເຊີຍສຳລັບບ້ານເຮືອນ ຫຼື ສິ່ງກໍ່ສ້າງ, ພືນລະປູກ, ຕົ້ນໄມ້ ແລະ ຊັບສິນອື່ນໆ ລວມທັງດິນຂອງປະຊາຊົນທີ່ໄດ້ສູນເສຍໄປ. ນອກຈາກນັ້ນ, ດຳລັດ ແລະ ຂໍ້ກຳນົດດັ່ງກ່າວກໍ່ຍັງໄດ້ປົກປ້ອງສິດທິອື່ນໆຫຼາຍດ້ານຂອງປະຊາຊົນ. ການສູນເສຍສິ່ງຕ່າງໆທີ່ຖືວ່າສຳຄັນທີ່ສຸດທີ່ໂຄງການຈະຕ້ອງໃຫ້ການຊົດເຊີຍມີຄື:

### ➢ ຖ້າວ່າທີ່ດິນ, ພືນລະປູກ ຫຼື ຊັບສິນໄດ້ຮັບຜົນກະທົບໃນໄລຍະສັ້ນຈາກໂຄງການ:

ໂຄງການຕ້ອງຈ່າຍຄ່າລາຍໄດ້ທີ່ທ່ານໄດ້ສູນເສຍໄປ ແລະ ຕ້ອງປົວແປງ ຫຼື ໃຊ້ແທນຄືນຊັບສິນຕ່າງໆຂອງທ່ານທີ່ໂຄງການເຮັດໃຫ້ເກີດຄວາມເສຍຫາຍນັ້ນໃຫ້ກັບຄືນສູ່ສະພາບເດີມຄືເກົ່າ. ພ້ອມກັນນັ້ນ, ໂຄງການກໍ່ຕ້ອງຊົດເຊີຍຄ່າເສຍຫາຍທັງໝົດທີ່ເກີດຂຶ້ນກັບທີ່ດິນ ຫຼື ຊັບສິນຂອງທ່ານ.

### ➢ ຖ້າຫາກທ່ານເສຍທີ່ດິນກະສິກຳຍ້ອນໂຄງການ:

ອີງຕາມລະບຽບການທີ່ເອີ້ນວ່າ "ດິນແທນດິນ," ໂຄງການຈະຕ້ອງເອົາດິນກະສິກຳບ່ອນໃໝ່ຢູ່ໃນສະພາບດີຄືເກົ່າ ແທນດິນກະສິກຳທີ່ທ່ານໄດ້ເສຍໄປຍ້ອນໂຄງການ. ຖ້າວ່າໂຄງການບໍ່ສາມາດຫາດິນກະສິກຳບ່ອນໃໝ່ມາແທນທ່ານໄດ້, ໂຄງການກໍ່ຕ້ອງຈ່າຍເງິນພຽງພໍໃຫ້ແກ່ທ່ານເພື່ອໄປຊື້ດິນກະສິກຳບ່ອນໃໝ່ໃຫ້ໄດ້ຕາມເນື້ອທີ່ ແລະ ຄືສະພາບດິນກະສິກຳບ່ອນເກົ່າທີ່ທ່ານໄດ້ສູນເສຍໄປ. ຖ້າວ່າດິນຂອງທ່ານເສຍຫາຍໄປແຕ່ສ່ວນໃດສ່ວນໜຶ່ງ ແລະ ສ່ວນທີ່ຍັງເຫຼືອບໍ່ໄດ້ຮັບຄວາມເສຍຫາຍແຕ່ກໍ່ບໍ່ສາມາດນຳໃຊ້ໄດ້ຄືເກົ່າ ໂຄງການຕ້ອງຊອກຫາດິນຕອນໃໝ່ທີ່ມີເນື້ອທີ່ ແລະ ມີຄວາມອຸດົມສົມບູນຄືກັບດິນຕອນເກົ່າຂອງທ່ານ (ນັບທັງສ່ວນທີ່ເສຍຫາຍ ແລະ ສ່ວນທີ່ນຳໃຊ້ບໍ່ໄດ້) ມາແທນຄືນໃຫ້ແກ່ທ່ານ. ຄ່າໃຊ້ຈ່າຍທັງໝົດລວມທັງຄ່າພາສີ, ຄ່າອາກອນ ຫຼື ຄ່າໃຊ້ຈ່າຍອື່ນໆທີ່ກ່ຽວຂ້ອງກັບດິນທີ່ໂຄງການນຳມາໃຊ້ແທນຄືນໃຫ້ແກ່ທ່ານນັ້ນ, ໂຄງການຕ້ອງເປັນຜູ້ຮັບຜິດຊອບທັງໝົດ.



➢ **ຖ້າຫາກທ່ານສູນເສຍເຮືອນຊານ ຫຼື ທຸລະກິດຂອງທ່ານ:**

ອີງຕາມກົດໝາຍຂອງລາວ, ໂຄງການຕ້ອງປຸກສ້າງເຮືອນໃຫ້ແກ່ປະຊາຊົນທຸກຄົນທີ່ສູນເສຍເຮືອນຊານ ຫຼື ຕ້ອງໄດ້ຍົກຍ້າຍໄປຕັ້ງຖິ່ນຖານຢູ່ບ່ອນໃໝ່. ຖ້າວ່າເຮືອນ ຫຼື ທຸລະກິດຂອງທ່ານຖືກທຳລາຍ ຫຼື ໄດ້ຮັບຜົນເສຍຫາຍຮ້າຍແຮງ, ເຈົ້າຂອງໂຄງການຕ້ອງຈ່າຍຄ່າເຮືອນ ຫຼື ທຸລະກິດທີ່ຖືກທຳລາຍ ຫຼື ໄດ້ຮັບຜົນເສຍຫາຍຮ້າຍແຮງນັ້ນໃຫ້ແກ່ທ່ານ. ຖ້າວ່າທ່ານເປັນເຈົ້າຂອງທີ່ດິນຊຶ່ງເປັນທີ່ຕັ້ງຂອງເຮືອນ ຫຼື ທີ່ຕັ້ງທຸລະກິດຂອງທ່ານ, ເຈົ້າຂອງໂຄງການຕ້ອງເອົາດິນບ່ອນໃໝ່ທີ່ມີເນື້ອທີ່ ແລະ ສະພາບເງື່ອນໄຂທີ່ສາມາດປຸກເຮືອນ ແລະ ດຳເນີນທຸລະກິດໄດ້ຄືແຕ່ກ່ອນແທນໃຫ້ແກ່ທ່ານພ້ອມທັງຈ່າຍຄ່າພາສີ, ອາກອນ ຫຼື ຄ່າໃຊ້ຈ່າຍອື່ນໆທັງໝົດທີ່ກ່ຽວຂ້ອງກັບດິນ. ນອກຈາກນັ້ນ, ເຈົ້າຂອງໂຄງການກໍ່ຕ້ອງຈ່າຍຄ່າຊົດເຊີຍສຳລັບການສູນເສຍສິ່ງກໍ່ສ້າງ ແລະ ລາຍໄດ້ທັງໝົດໃຫ້ແກ່ທ່ານ. ຄຸນນະພາບຂອງໄມ້ປຸກເຮືອນຫຼັງໃໝ່ກໍ່ຕ້ອງໃຫ້ຄືກັບຄຸນນະພາບໄມ້ເຮືອນເກົ່າຂອງທ່ານທີ່ໄດ້ສູນເສຍໄປນັ້ນ.

➢ **ຖ້າຫາກທ່ານສູນເສຍຜົນລະປູກ, ຕົ້ນໄມ້ໃຊ້ສອຍສຳລັບປຸກສ້າງ ຫຼື ຕົ້ນໄມ້ໃຫ້ໝາກ:**

ໂຄງການຕ້ອງຈ່າຍຄ່າຊົດເຊີຍແກ່ຄວາມເສຍຫາຍສຳລັບຜົນລະປູກຂອງທ່ານຕາມລາຄາຊື້ຂາຍກັນໃນຕະຫລາດປະຈຸບັນ. ຖ້າວ່າຕົ້ນໄມ້ໃຊ້ສອຍສຳລັບການປຸກສ້າງຂອງທ່ານຖືກທຳລາຍຍ້ອນໂຄງການ, ໂຄງການກໍ່ຕ້ອງຈ່າຍແກ່ຄ່າເສຍຫາຍລາຍໄດ້ໃຫ້ແກ່ທ່ານພ້ອມທັງຊອກຫາດິນຕອນໃໝ່ທີ່ມີເງື່ອນໄຂ ແລະ ຄຸນນະພາບດີຄືເກົ່າເພື່ອປູກຕົ້ນໄມ້ໃຊ້ສອຍສຳລັບປຸກສ້າງໃຫ້ແກ່ທ່ານ. ຄຽງຄູ່ກັນນັ້ນ, ເຈົ້າຂອງໂຄງການກໍ່ຕ້ອງຈ່າຍຊົດເຊີຍລາຍໄດ້ທີ່ທ່ານເສຍໄປ ແລະ ທັງຈ່າຍຄ່າບຸກເບີກ ແລະ ສັບຊ່າວທີ່ດິນເຮັດສວນປູກຕົ້ນໄມ້ໃຫ້ແກ່ທ່ານທັງໝົດ. ຖ້າວ່າທ່ານສູນເສຍພືດຜົນ ຫຼື ຕົ້ນໄມ້ໃຫ້ໝາກ, ໂຄງການກໍ່ຕ້ອງຈ່າຍຄ່າຊົດເຊີຍເປັນເງິນພຽງພໍກັບມູນຄ່າຂອງຜົນລະປູກທັງໝົດ ແລະ ເອົາມູນຄ່າຜົນລະປູກທັງໝົດປະຈຳປີມາຄູນໃຫ້ຈຳນວນປີທີ່ຄາດວ່າຕົ້ນໄມ້ເຫຼົ່ານັ້ນຍັງສາມາດໃຫ້ໝາກຜົນຕໍ່ໄປໄດ້. ດັ່ງນັ້ນ, ເຈົ້າຂອງໂຄງການຕ້ອງຈ່າຍຄ່າຊົດເຊີຍຕົ້ນໄມ້ໃຫ້ໝາກທີ່ທ່ານໄດ້ສູນເສຍໄປນັ້ນໃຫ້ແກ່ທ່ານຈົນຄົບອາຍຸທີ່ຕົ້ນໄມ້ເຫຼົ່ານັ້ນສາມາດໃຫ້ໝາກຜົນໄດ້.

➢ **ຖ້າຫາກທ່ານສູນເສຍສິ່ງກໍ່ສ້າງໃນຊຸມຊົນຂອງຕົນ:**

ສິ່ງກໍ່ສ້າງຂອງຊຸມຊົນໃນນີ້ໝາຍເຖິງຄອງຊົນລະທານ, ນ້ຳປະປາ, ລະບົບຄອງລະບາຍນ້ຳ, ໂຮງຮຽນ, ວັດວາອາຮາມທີ່ເປັນບ່ອນສັກກາລະບູຊາ ແລະ ສິ່ງກໍ່ສ້າງຕ່າງໆລວມທັງຕະຫຼາດ ແລະ ສາລາຊຸມຊົນ. ຖ້າວ່າສິ່ງກໍ່ສ້າງໃດໜຶ່ງທີ່ກ່າວມານີ້ໄດ້ຮັບຄວາມເສຍຫາຍ ຫຼື ຖືກທຳລາຍ ເຈົ້າຂອງໂຄງການຕ້ອງກໍ່ສ້າງແທນໃຫ້ຢູ່ໃນສະພາບດີຄືແຕ່ກ່ອນ.

➢ **ຖ້າຫາກທ່ານບໍ່ມີໜັງສືກຳມະສິດທີ່ດິນ ຫຼື ກຳມະສິດຊັບສິນ:**

ຖ້າຫາກທ່ານບໍ່ມີໜັງສືກຳມະສິດທີ່ດິນ ຫຼື ກຳມະສິດຊັບສິນຖືກຕ້ອງຕາມກົດໝາຍກໍ່ຕາມ, ເຈົ້າຂອງໂຄງການກໍ່ຕ້ອງໄດ້ຈ່າຍຄ່າຊົດເຊີຍເຕັມສ່ວນສຳລັບສິດທິການນຳໃຊ້ທີ່ດິນ ຫຼື ຊັບສິນອື່ນໆທີ່ໄດ້ຮັບຄວາມເສຍຫາຍຈາກໂຄງການໃຫ້ແກ່ທ່ານຄືກັນ. ເຖິງຢ່າງໃດກໍ່ຕາມ, ຖ້າທ່ານບໍ່ມີໜັງສືຢັ້ງຢືນກຳມະສິດ ຫຼື ຫຼັກຖານອ້າງອີງການເປັນເຈົ້າຂອງທີ່ດິນ ຫຼື ຊັບສິນທີ່ໄດ້ຮັບຄວາມເສຍຫາຍນັ້ນ ມັນເປັນການຍາກທີ່ຈະຮຽກຫວງເອົາຄ່າຊົດເຊີຍຈາກເຈົ້າຂອງໂຄງການ. ສະນັ້ນ, ກ່ອນການກໍ່ສ້າງເຂື່ອນທ່ານຕ້ອງເຮັດບັນທຶກລາຍການຊັບສິນ ແລະ ສິ່ງຂອງທັງໝົດທີ່ທ່ານມີ ຫຼື ໄດ້ນຳໃຊ້ມາ, ໃນນັ້ນກໍ່ແມ່ນລວມທັງທີ່ດິນ, ຕົ້ນໄມ້ໃຫ້ໝາກ ແລະ ສັດລ້ຽງຂອງທ່ານ. ການສ້າງບົດບັນທຶກຊັບສິນຕ່າງໆທີ່ກ່າວມານີ້ມີຄວາມສຳຄັນຫຼາຍເພື່ອທ່ານຈະໄດ້ນຳເອົາໄປເປັນຫຼັກຖານຢັ້ງຢືນກັບເຈົ້າຂອງໂຄງການໃຫ້ຊົດເຊີຍຄ່າເສຍຫາຍແກ່ທ່ານດ້ວຍຄວາມເປັນທຳ.

- **ຖ້າວ່າສະຖານທີ່ຫາປາ ຫຼື ທີ່ດິນສ່ວນລວມຂອງຊຸມຊົນພວກທ່ານໄດ້ຮັບຄວາມເສຍຫາຍ ຫຼື ພວກທ່ານບໍ່ສາມາດນໍາໃຊ້ໄດ້ຄືເກົ່າ:**

ເຈົ້າຂອງໂຄງການຕ້ອງຈ່າຍຄ່າຊົດເຊີຍຕໍ່ຄວາມເສຍຫາຍໃຫ້ແກ່ພວກທ່ານດ້ວຍເງິນສົດ. ນອກນັ້ນ, ໂຄງການກໍ່ ຕ້ອງຈ່າຍເງິນສົດ ແລະ ອຸປະກອນ ພ້ອມທັງຈັດຕັ້ງການຝຶກອົບຮົມໃຫ້ແກ່ພວກທ່ານເພື່ອຊ່ວຍເຫຼືອປົວແປງຊີວິດການເປັນຢູ່ຂອງພວກທ່ານໃຫ້ສາມາດກັບຄືນສູ່ສະພາບປົກກະຕິຄືກັນກັບແຕ່ຕອນບໍ່ທັນມີໂຄງການ.

| |
|---|
| ກົດໝາຍລາວສະບັບເລກທີ 2432, ຂໍ້ກໍານົດວ່າດ້ວຍການຈັດຕັ້ງປະຕິບັດດໍາລັດນາຍົກລັດຖະມົນຕີສະບັບເລກທີ 192/ນຍ ວ່າດ້ວຍການຊົດເຊີຍ ແລະ ການຍົກຍ້າຍຈັດສັນທີ່ຢູ່ອາໄສໃຫ້ແກ່ປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການພັດທະນາໄດ້ກໍານົດເອົາໄວ້ວ່າ: ປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການທີ່ເຄີຍທໍາມາຫາກິນ ແລະ ເຄີຍມີລາຍໄດ້ຈາກແຫຼ່ງຊັບພະຍາກອນທໍາມະຊາດ ເຊັ່ນຈາກການລ່າສັດ, ການເກັບເຄື່ອງປ່າຂອງດົງ, ການຫາປາ ແລະ ອື່ນໆ ລ້ວນແລ້ວແຕ່ມີສິດທີ່ຈະໄດ້ຮັບການຊົດເຊີຍຈາກເຈົ້າຂອງໂຄງການດ້ວຍເງິນສົດ ຫຼື ດ້ວຍການຊ່ວຍເຫຼືອຈັດຫາວິທີການທໍາມາຫາກິນແບບໃໝ່ເພື່ອປັບປຸງລາຍໄດ້ໃຫ້ແກ່ຄົວເຮືອນ ແລະ ຊີວິດການເປັນຢູ່ຂອງເຂົາເຈົ້າໃຫ້ດີຂຶ້ນ ຫຼື ຢ່າງໜ້ອຍສຸດກໍ່ແມ່ນເຮັດໃຫ້ລະດັບຊີວິດການເປັນຢູ່ຂອງຜູ້ໄດ້ຮັບຜົນກະທົບຄືນສູ່ສະພາບປົກກະຕິຄືກັບເວລາກ່ອນມີໂຄງການ. |




**ສິ່ງທີ່ທ່ານເຄີຍຊົມໃຊ້ມາຕະຫຼອດຊີວິດຂອງທ່ານ ເຊັ່ນວ່າ ຊັບພະຍາກອນປ່າໄມ້ນັ້ນ ເປັນສິ່ງທີ່ບໍ່ສາມາດຈະຊອກຫາມາປ່ຽນແທນງ່າຍໆໄດ້.**

- **ຖ້າວ່າໂຄງການໃຫ້ທ່ານຍົກຍ້າຍ,**

ຖ້າວ່າໂຄງການໃຫ້ທ່ານຍົກຍ້າຍ, ດິນທີ່ໂຄງການນໍາມາໃຊ້ທົດແທນແກ່ທ່ານນັ້ນຕ້ອງໃຫ້ຢູ່ໃກ້ກັບດິນທີ່ທ່ານໄດ້ສູນເສຍໄປເທົ່າໃດຍິ່ງດີ ຫຼື ຖ້າຫາກຢູ່ໄກຈາກບ່ອນເກົ່າກໍ່ຕ້ອງເປັນດິນເໝາະສົມ ແລະ ສາມາດຮັບເອົາໄດ້. ສິ່ງສໍາຄັນ, ດິນຕອນໃໝ່ທີ່ເຈົ້າຂອງໂຄງການນໍາມາທົດແທນໃຫ້ທ່ານນັ້ນຕ້ອງມີໜັງສືກໍາມະສິດອອກໃຫ້ທ່ານໂດຍທີ່ທ່ານບໍ່ຕ້ອງໄດ້ຈ່າຍຫຍັງ. ເຂດທີ່ຕັ້ງບ້ານຍົກຍ້າຍໃໝ່ທັງໝົດຕ້ອງມີແຫຼ່ງນໍ້າກິນນໍ້າໃຊ້, ມີລະບົບອະນາໄມ, ຄອງລະບາຍນໍ້າໂສໂຄກ, ຖະໜົນຫົນທາງ, ໄຟຟ້າ, ໂຮງຮຽນ,

ໂຮງໝໍ ແລະ ສະຖານທີ່ສັກກາລະບູຊາທາງສາດສະໜາຢ່າງຄືບຖ້ວນເຈົ້າຂອງໂຄງການຈະຕ້ອງຈັດຫາສິ່ງອຳນວຍຄວາມສະດວກທັງໝົດເຫຼົ່ານີ້ໃຫ້ຄົບຖ້ວນກ່ອນທີ່ຈະຍົກຍ້າຍເອົາຜູ້ໄດ້ຮັບຜົນກະທົບຈາກໂຄງການເຂົ້າໄປຢູ່.

**ເຂດທີ່ຕັ້ງຖິ່ນຖານໃໝ່ສຳລັບຜູ້ໄດ້ຮັບຜົນກະທົບຈາກໂຄງການຕ້ອງເປັນເຂດທີ່ມີເງື່ອນໄຂສະດວກໃຫ້ແກ່ການເຮັດທຸລະກິດ ແລະ ການພັດທະນາຊີວິດການເປັນຢູ່ຂອງເຂົາເຈົ້າ. ເຂດທີ່ຕັ້ງບ້ານໃໝ່ໃນຊົນນະບົດກໍ່ຕ້ອງມີເນື້ອທີ່ດິນ ພຽງພໍເພື່ອເກັບຮັກສາຜົນຜະລິດກະສິກຳ, ເພື່ອສັດລ້ຽງ ແລະ ເຮັດສວນຄົວ.**

➢ **ຖ້າວ່າການຍົກຍ້າຍຫາກເຮັດໃຫ້ທ່ານບໍ່ມີບ່ອນທຳມາຫາກິນສຳລັບຊຸມຊົນຂອງທ່ານ ເຊັ່ນວ່າປ່າໄມ້ ຫຼື ບ່ອນຫາປາ:**

ເຂດທີ່ດິນບ່ອນທີ່ທ່ານຈະຍົກຍ້າຍໄປຕັ້ງຖິ່ນຖານໃໝ່ນັ້ນຕ້ອງມີປ່າໄມ້, ທົ່ງຫຍ້າ ແລະ ສະຖານທີ່ລ້ຽງສັດ ແລະ ຊັບພະຍາກອນສ່ວນລວມອື່ນໆທີ່ມີເງື່ອນໄຂໃຫ້ທ່ານສາມາດທຳມາຫາກິນໄດ້.

➢ **ຖ້າວ້າເຈົ້າຂອງໂຄງການຍ້າຍເອົາຜູ້ໄດ້ຮັບຜົນກະທົບຈາກໂຄງການມາຢູ່ຮ່ວມໃນບ້ານຂອງທ່ານ:**

ແນ່ນອນວ່າ ຖ້າມີຄົນຈາກບ້ານອື່ນຍົກຍ້າຍເຂົ້າມາຢູ່ໃນບ້ານຂອງທ່ານ, ທ່ານກໍ່ອາດຈະໄດ້ຮັບຄວາມຫຍຸ້ງຍາກ. ສະນັ້ນ, ເຈົ້າຂອງໂຄງການກໍ່ຕ້ອງຮັບຜິດຊອບໃຫ້ການຊ່ວຍເຫຼືອ ແລະ ໃຫ້ຄ່າຊົດເຊີຍແກ່ທ່ານຄືກັນກັບຄົນອື່ນໆ ທີ່ໄດ້ຮັບຜົນກະທົບຈາກໂຄງການເພື່ອໃຫ້ທ່ານທີ່ເປັນເຈົ້າຂອງບ້ານມາແຕ່ກ່ອນນັ້ນມີໂອກາດ ແລະ ເງື່ອນໄຂພຽງພໍໃນການຊົມໃຊ້ດິນ, ປ່າໄມ້, ນ້ຳ ຕະຫຼອດຮອດຊັບພະຍາກອນທຳມະຊາດອື່ນໆຄືກັນກັບຕອນບໍ່ທັນມີຜູ້ຍົກຍ້າຍມາຢູ່ຮ່ວມນຳ. ນອກຈາກນັ້ນ, ເຈົ້າຂອງໂຄງການຕ້ອງເປັນຜູ້ຮັບຜິດຊອບຊ່ວຍເຫຼືອແກ້ໄຂບັນຫາຂໍ້ຂັດແຍ່ງທັງໝົດທີ່ອາດຈະເກີດຂຶ້ນພາຍໃນບ້ານ.



ຖ້າວ່າມີບັນຫາຂໍ້ຂັດແຍ່ງເກີດຂຶ້ນລະຫວ່າງປະຊາຊົນທີ່ຍົກຍ້າຍເຂົ້າມາຢູ່ໃໝ່ກັບປະຊາຊົນທີ່ອາໄສຢູ່ໃນບ້ານນັ້ນມາກ່ອນແລ້ວ ທັງສອງຝ່າຍກໍ່ຄວນຈະຮ່ວມກັນແກ້ໄຂບັນຫານັ້ນໂດຍສັນຕິວິທີ.

## ◈ ການໃຫ້ຄວາມຊ່ວຍເຫຼືອໃນໄລຍະຍົກຍ້າຍ ແລະ ໄລຍະຂ້າມຜ່ານ

ດຳລັດນາຍົກລັດຖະມົນຕີວ່າດ້ວຍການຊົດເຊີຍ ແລະ ການຍົກຍ້າຍຈັດສັນທີ່ຢູ່ອາໄສໃໝ່ຂອງໂຄງການພັດທະນາສະບັບເລກທີ 192/ນຍ, ມາດຕາ 7 ໄດ້ກຳນົດເອົາໄວ້ວ່າ:

- ການຍົກຍ້າຍຈັດສັນທີ່ຢູ່ອາໄສໃໝ່ໃຫ້ແກ່ປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການຕ້ອງໃຫ້ສຳເລັດກ່ອນການລົງມືກໍ່ສ້າງເຂື່ອນຢ່າງຕ່ຳສຸດໜຶ່ງເດືອນ.
- ການກໍ່ສ້າງ ແລະ ພັດທະນາບ້ານໃໝ່ບ່ອນທີ່ໂຄງການຈະຍົກຍ້າຍເອົາທ່ານເຂົ້າໄປຢູ່ນັ້ນກໍ່ຕ້ອງໃຫ້ສຳເລັດກ່ອນທີ່ທ່ານຈະເຂົ້າໄປຢູ່.
- ໄລຍະຂ້າມຜ່ານໃນລະຫວ່າງທີ່ທ່ານຍົກຍ້າຍເຂົ້າໄປຢູ່ບ່ອນໃໝ່ (ໝາຍເຖິງໄລຍະເວລາສຳລັບການປັບຕົວຂອງທ່ານໃຫ້ລຶ້ງເຄີຍກັບຊີວິດໃໝ່ ແລະ ຟື້ນຟູການດຳລົງຊີວິດຂອງທ່ານໃຫ້ກັບຄືນສູ່ສະພາບປົກກະຕິຄືແຕ່ກ່ອນ) ຕ້ອງເປັນໄລຍະເວລາສັ້ນເທົ່າໃດຍິ່ງດີ.

**ໃນໄລຍະຂ້າມຜ່ານໃນການຕັ້ງຖິ່ນຖານໃໝ່ຂອງຜູ້ໄດ້ຮັບຜົນກະທົບຈາກໂຄງການນັ້ນ, ເຈົ້າຂອງໂຄງການຕ້ອງ:**

- ຊ່ວຍເຫຼືອ ແລະ ໃຫ້ເງິນສະໜັບສະໜູນການຍົກຍ້າຍທ່ານໄປຢູ່ບ່ອນໃໝ່.
- ໃຫ້ອາຫານ ຫຼື ເງິນເພື່ອຊື້ອາຫານແກ່ຜູ້ຍົກຍ້າຍຈົນກວ່າການຍົກຍ້າຍຈັດສັນທີ່ຢູ່ອາໄສຈະສຳເລັດລົງ.
- ໃຫ້ການຊ່ວຍເຫຼືອພັດທະນາເຂດທີ່ຕັ້ງຖິ່ນຖານໃໝ່ຈົນກວ່າທ່ານຈະສາມາດປັບປຸງຊີວິດການເປັນຢູ່ຂອງທ່ານໃຫ້ກັບຄືນສູ່ສະພາບປົກກະຕິດີຄືແຕ່ກ່ອນ.

## ✱ ບັນຫາຂອງໂຄງການຟື້ນຟູຊີວິດການເປັນຢູ່

ການທີ່ລັດຖະບານລາວມີນະໂຍບາຍ ແລະ ໂຄງການຊ່ວຍເຫຼືອຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນທຸກຄົນທີ່ໄດ້ຮັບຜົນກະທົບຈາກໂຄງການສ້າງເຂື່ອນນັ້ນຖືວ່າເປັນແນວທາງທີ່ດີ, ຖືກຕ້ອງ ແລະ ເປັນທຳທີ່ສຸດແລ້ວ. ແຕ່ເຖິງຢ່າງໃດກໍ່ຕາມ, ການປ່ຽນແປງຊີວິດການເປັນຢູ່ຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກເຂື່ອນເພື່ອໃຫ້ກັບຄືນສູ່ສະພາບປົກກະຕິດີໄດ້ນັ້ນເປັນສິ່ງທີ່ບໍ່ສາມາດເຮັດໄດ້ໂດຍງ່າຍດາຍ.

ຕົວຢ່າງວ່າ, ການເຮັດໜອງປາເພື່ອລ້ຽງປາໃນລາວເປັນສິ່ງທີ່ສາມາດເຮັດໄດ້ບໍ່ຍາກ. ແຕ່ຈະໃຫ້ສຳເລັດຜົນໄດ້ດີນັ້ນ, ສິ່ງສຳຄັນກໍ່ຕ້ອງໃຫ້ການຝຶກອົບຮົມດ້ານການຄຸ້ມຄອງໜອງປາຫຼາຍໆບໍຫຼາຍຕ່າວໃຫ້ແກ່ຜູ້ລ້ຽງປາ, ການຂຸດໜອງປາກໍ່ຕ້ອງໃຫ້ຖືກຕາມຫຼັກວິທີ ແລະ ຕ້ອງມີລູກປາ ແລະ ອາຫານເກືອປາອີກດ້ວຍ. ການທຳມາຫາກິນດ້ວຍການລ້ຽງປານັ້ນມີຄວາມແຕກຕ່າງກັນຫຼາຍກັບການຫາປາກິນຈາກແມ່ນ້ຳ ຫຼື ຫ້ວຍໜອງຄອງບຶງຕາມທຳມະຊາດຍ້ອນວ່າການລ້ຽງປານັ້ນທ່ານຈະຕ້ອງໄດ້ຊື້ລູກປາ ແລະ ອາຫານເກືອປາ. ຢູ່ໃນຫຼາຍທ້ອງຖິ່ນຂອງລາວ, ພວກເຮົາຍັງຊອກຫາຊື້ລູກປາມາລ້ຽງບໍ່ໄດ້ງ່າຍໆ. ນອກຈາກຈະມີໜອງປາ, ມີລູກປາ, ມີອາຫານໃຫ້ປາກິນແລ້ວ ໃນຍາມຝົນທ່ານກໍ່ຍັງຕ້ອງປົກປັກຮັກສາປາບໍ່ໃຫ້ມັນບິນໜີຈາກໜອງຂອງທ່ານ. ຖ້າວ່າຜູ້ສ້າງເຂື່ອນຕົກລົງຂຸດໜອງປາໃຫ້ທ່ານໃນເຂດທີ່ຢູ່ອາໄສໃໝ່ ທ່ານກໍ່ຕ້ອງສະເໜີໃຫ້ເຈົ້າຂອງເຂື່ອນຈັດຕັ້ງການຝຶກອົບຮົມການຄຸ້ມຄອງແລະພັດທະນາໜອງປາໃຫ້ແກ່ທ່ານ. ນອກຈາກນັ້ນ, ທ່ານຍັງຕ້ອງສະເໜີໃຫ້ເຈົ້າຂອງເຂື່ອນຊື້ລູກປາ ແລະ ອາຫານເກືອປາໃຫ້ແກ່ທ່ານໄປຈົນກວ່າວ່າທ່ານຈະສາມາດຫາປາທຳມະຊາດໄດ້ຄືເກົ່າ.

ການເຮັດນາແຊງຢູ່ໃນລາວຍັງມີຄວາມຫຍຸ້ງຍາກຢູ່ຍ້ອນວ່າທ່ານຕ້ອງໄດ້ຈ່າຍເງິນຈຳນວນຫຼວງຫຼາຍເພື່ອຊື້ແນວພັນເຂົ້າ, ຊື້ປຸ໋ຍ, ຈ່າຍຄ່າຈັກດູດນ້ຳເຂົ້າໃສ່ນາ, ຄ່າສ້ອມແປງ ແລະ ບຳລຸງຮັກສາເຄື່ອງຈັກດູດນ້ຳ. ຜູ້ສ້າງເຂື່ອນອາດຈະສະເໜີໃຫ້ປະຊາຊົນຫັນໄປປູກພືດເສດຖະກິດແທນການປູກເຂົ້າໃນລະດູແລ້ງເພື່ອຂາຍຜົນຜະລິດໃນຕະຫຼາດ. ຖ້າວ່າຜູ້ສ້າງເຂື່ອນຫາກສະເໜີໃຫ້ທ່ານປູກພືດຊະນິດນີ້ ທ່ານກໍ່ຕ້ອງໃຫ້ມີຄວາມໝັ້ນໃຈວ່າທ່ານມີບ່ອນທີ່ຈະສາມາດຂາຍພືດຜົນນັ້ນໄດ້. ພ້ອມກັນນັ້ນກໍ່ຕ້ອງໃຫ້ຜູ້ກໍ່ສ້າງເຂື່ອນຊ່ວຍຈ່າຍຄ່າດູດນ້ຳເຂົ້າໃສ່ນາ ແລະ ຄ່າຝຸ່ນຄ່າປຸຍໃຫ້ແກ່ທ່ານ.



## ◈ ຖ້າຫາກທ່ານມີບັນຫາຮ້ອງທຸກ

ໃນໄລຍະການກໍ່ສ້າງໂຄງການ ແລະ ການຍົກຍ້າຍຈັດສັນທີ່ຢູ່ອາໄສນັ້ນ ໂຄງການຕ້ອງເປີດໂອກາດໃຫ້ແກ່ທ່ານສະເໜີບັນຫາຂໍ້ຂ້ອງໃຈຕ່າງໆທີ່ທ່ານມີ ແລະ ໂຄງການຕ້ອງເປັນຜູ້ແກ້ໄຂບັນຫາທັງໝົດເຫຼົ່ານັ້ນໃຫ້ແກ່ທ່ານ. ເຈົ້າຂອງໂຄງການຕ້ອງເຮັດບົດບັນທຶກທຸກຂໍ້ຂ້ອງໃຈ ແລະ ຄຳຮ້ອງທຸກຂອງທ່ານເປັນລາຍລັກອັກສອນ.

ທຸກໆເມືອງທີ່ໄດ້ຮັບຜົນກະທົບຈາກໂຄງການຕ້ອງຈັດຕັ້ງກຸ່ມປະຊາຊົນຂຶ້ນມາເພື່ອແກ້ໄຂບັນຫາຂອງປະຊາຊົນ. ກຸ່ມຕ່າງໆເຫຼົ່ານີ້ເອີ້ນວ່າຄະນະກຳມະການແກ້ໄຂການຮ້ອງທຸກຂອງປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ. ຄະນະກຳມະການແຕ່ລະຄະນະຕ້ອງປະກອບດ້ວຍບຸກຄົນດັ່ງຕໍ່ໄປນີ້:

- ຜູ້ຕາງໜ້າລັດຖະບານຂັ້ນທ້ອງຖິ່ນ (ຈາກເມືອງ ແລະ/ຫຼື ແຂວງ)
- ນາຍບ້ານ
- ຜູ້ຕາງໜ້າຄົວເຮືອນທີ່ໄດ້ຮັບຜົນກະທົບ (ບໍ່ແມ່ນນາຍບ້ານ)
- ແນວໂຮມບ້ານ ຫຼື ຜູ້ຕາງໜ້າອົງການຈັດຕັ້ງມະຫາຊົນຂັ້ນທ້ອງຖິ່ນ
- ຜູ້ຕາງໜ້າເຈົ້າຂອງໂຄງການ

ຖ້າວ່າຄຳຮ້ອງທຸກຂອງທ່ານບໍ່ໄດ້ຮັບການແກ້ໄຂຈາກໂຄງການພາຍໃນ 15 ມື້ ນັບຕັ້ງແຕ່ມື້ຍື່ນຄຳຮ້ອງທຸກເປັນຕົ້ນໄປ ຫຼື ຖ້າຫາກວ່າທ່ານບໍ່ເຫັນດີກັບສິ່ງທີ່ເຈົ້າຂອງໂຄງການຕົກລົງຕອບສະໜອງໃຫ້ແກ່ທ່ານ, ທ່ານກໍ່ສາມາດຍື່ນຄຳຮ້ອງທຸກຂອງຕົນໄປຫາຫ້ອງການໃຫຍ່ຂອງເຈົ້າຂອງໂຄງການ ແລະ ຫ້ອງການຄຸ້ມຄອງຊັບພະຍາກອນແຫຼ່ງນ້ຳ ແລະ ສິ່ງແວດລ້ອມໃນຂັ້ນເມືອງ ຫຼື ແຂວງຂອງຕົນ ຫຼື ບໍ່ກໍ່ຍື່ນໄປຫາຫ້ອງການຂັ້ນສູນກາງໄດ້.

ຖ້າວ່າທ່ານຍື່ນຄຳຮ້ອງທຸກໄປຫາຫ້ອງການດັ່ງກ່າວຕາມລຳດັບ ແຕ່ບໍ່ໄດ້ຮັບຄຳຕອບ ຫຼື ບໍ່ໄດ້ຮັບການແກ້ໄຂພາຍໃນ 20 ມື້, ທ່ານສາມາດນຳເອົາຄຳຮ້ອງທຸກຂອງຕົນຍື່ນຕໍ່ສານທີ່ຮັບຜິດຊອບທາງດ້ານກົດໝາຍ.

ການຍື່ນຄຳຮ້ອງທຸກຂອງທ່ານຕໍ່ເຈົ້າຂອງໂຄງການ ຫຼື ຕໍ່ສານນັ້ນທ່ານບໍ່ຕ້ອງເສຍຄ່າໃຊ້ຈ່າຍໃດໆ.

ນອກຈາກນັ້ນ, ທ່ານຍັງສາມາດໃຊ້ໂທລະສັບສາທາລະນະໂທເຂົ້າໄປຫາສະພາແຫ່ງຊາດເພື່ອສະເໜີຄຳຮ້ອງທຸກກ່ຽວກັບການສຳປະທານທີ່ດິນໃນເຂດຂອງຕົນ. ບຸກຄົນໃດກໍ່ໄດ້ສາມາດຕາງໜ້າໃຫ້ແກ່ຊຸມຊົນ ແລະ ກຸ່ມຊຸມຊົນໂທລະສັບໄປຫາສະພາແຫ່ງຊາດເພື່ອໃຫ້ສະພາແຫ່ງຊາດໄດ້ຮູ້ຄຳຮ້ອງທຸກຂອງຊຸມຊົນສ່ວນລວມ.

**ສຳລັບເລກໂທລະສັບສາຍພິເສດເພື່ອຕິດຕໍ່ຫາສະພາແຫ່ງຊາດໃຫ້ເບິ່ງຢູ່ໜ້າທີ 38.**

## ◈ ການກວດກາວຽກກໍ່ສ້າງ ແລະ ການຍົກຍ້າຍຈັດສັນທີ່ຢູ່ອາໄສ

ກົດໝາຍໄດ້ລະບຸໄວ້ວ່າ ຕ້ອງໃຫ້ອົງການກວດກາເປັນກາງ (ບໍ່ຂື້ນກັບພາກສ່ວນໃດ) ເປັນຜູ້ກວດກາເຂດໂຄງການ ແລະ ເຂດຍົກຍ້າຍຈັດສັນທີ່ຢູ່ອາໄສ. ການກວດການັ້ນຢ່າງໜ້ອຍສຸດແມ່ນປະຕິບັດໜຶ່ງຄັ້ງຕໍ່ 6 ເດືອນ ຫຼັງຈາກສຳເລັດການຍົກຍ້າຍຈັດສັນທີ່ຢູ່ອາໄສໃຫ້ແກ່ຜູ້ໄດ້ຮັບຜົນກະທົບແລ້ວເພື່ອຮັບປະກັນໃຫ້ເຈົ້າຂອງໂຄງການປະຕິບັດຖືກຕ້ອງຕາມກົດໝາຍທຸກຂັ້ນຕອນ.

ທ່ານເອງຕ້ອງກຽມພ້ອມສະເໜີບັນຫາຂໍ້ຂ້ອງໃຈທີ່ຕົນມີຕໍ່ຜູ້ກວດກາໃນເວລາເຂົາເຈົ້າລົງໄປກວດກາເຂດໂຄງການ ແລະ ເຂດຍົກຍ້າຍຈັດສັນທີ່ຢູ່ອາໄສຂອງທ່ານ. ຖ້າມີຫຼາຍຄົນສະເໜີບັນຫາຂໍ້ຂ້ອງໃຈທີ່ຕົນເອງມີເທົ່າໃດຍິ່ງເປັນການດີ. ດີແທ້ກໍ່ແມ່ນໃຫ້ຈັດຕັ້ງກັນເຮັດບັນຊີລາຍການບັນຫາຂໍ້ຂ້ອງໃຈ ແລະ ຄຳຮ້ອງທຸກທີ່ແຕ່ລະຄົນມີລວມເຂົ້າກັນເພື່ອສະເໜີຕໍ່ຜູ້ກວດກາຈາກອົງການກວດກາເປັນກາງ.

## ສະຫຼຸບ

ການປ່ຽນແປງຕ່າງໆທີ່ເກີດຂື້ນຍ້ອນໂຄງການສ້າງເຂື່ອນນັ້ນບໍ່ເຄີຍວ່າຈະແກ້ໄຂໄດ້ຢ່າງສະດວກສະບາຍ. ການທີ່ຈະເຮັດໃຫ້ຜູ້ອື່ນເຄົາລົບນັບຖືສິດທິຂອງທ່ານນັ້ນ ມີຄວາມຈຳເປັນທີ່ທ່ານເອງຕ້ອງໄດ້ສຶກສາໃຫ້ຮູ້ຫຼາຍຢ່າງ, ໃຫ້ຮູ້ການວາງແຜນເພື່ອອະນາຄົດ ແລະ ຕ້ອງເປັນຄົນກ້າຫານ ແລະ ກ້າສະແດງອອກ. ນອກຈາກນັ້ນກໍ່ຍັງຮຽກຮ້ອງໃຫ້ທ່ານຕ້ອງຮ່ວມເຮັດວຽກກັບຫຼາຍກຸ່ມຄົນເພື່ອສ້າງອະນາຄົດທີ່ມີຄວາມຖືກຕ້ອງ ແລະ ເປັນທຳ. ສິ່ງສຳຄັນກໍ່ຄື ທ່ານເອງຕ້ອງກ້າເວົ້າກ້າຖາມ ແລະ ກ້າຮຽກທວງເອົາການຊົດເຊີຍຈາກໂຄງການໃນສິ່ງທີ່ທ່ານເຫັນວ່າຄວນຈະໄດ້ຮັບ ກໍ່ຄືການຊົດເຊີຍໃຫ້ສົມສ່ວນກັບຜົນກະທົບທີ່ທ່ານໄດ້ຮັບຈາກໂຄງການ. ເຈົ້າຂອງໂຄງການອາດຈະຕ້ອງໄດ້ໃຫ້ການຊົດເຊີຍແກ່ຜູ້ໄດ້ຮັບຜົນກະທົບຈາກໂຄງການໄປຈົນກວ່າໂຄງການຈະສິ້ນສຸດລົງ.

**ປະຊາຊົນໃນທົ່ວໂລກໄດ້ປະສົບບັນຫາຄືກັນກັບທີ່ທ່ານກຳລັງປະສົບຢູ່ດຽວນີ້. ສະນັ້ນ, ຈົ່ງຢ່າໄດ້ເຂົ້າໃຈວ່າ ທ່ານຢູ່ຢ່າງໂດດດ່ຽວ!**



# ບ່ອນຕິດຕໍ່ພົວພັນໃນເວລາທີ່ທ່ານມີບັນຫາ

ຫ້ອງການຄຸ້ມຄອງຊັບພະຍາກອນແຫຼ່ງນໍ້າ ແລະ ສິ່ງແວດລ້ອມທີ່ນະຄອນຫຼວງວຽງຈັນ:
ຫ້ອງການຄຸ້ມຄອງຊັບພະຍາກອນແຫຼ່ງນໍ້າ ແລະ ສິ່ງແວດລ້ອມ ,
ໂທລະສັບ: +856 21 263 799
Email: wrea@wrea.gov.la
ເວບໄຊຍ: www.wrea.gov.la

**ສະພາແຫ່ງຊາດ:**

ກົມຄົ້ນຄວ້າຄໍາຮ້ອງຂໍຄວາມເປັນທໍາ ແລະ ບັນຫາສັນຊາດ

ໂທລະສັບ: (856-21) 413 504

ອົງການແມ່ນໍ້າສາກົນ (International Rivers)
2150 Allston Way Suite 300
Berkeley, CA 94804, USA
ໂທລະສັບ: + 1 510 848 1155
Email: info@internationalrivers.org

INTERNATIONAL
RIVERS
people • water • life